# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາລາມລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

01-08 ມັງກອນ 2025
ປີທີ 14
ສະບັບທີ 1000
ລາຍສັບປະດາ


## ປະທານສະພາແຫ່ງຊາດ ພົບປະໂອ້ລົມນັກຂ່າວສື່ມວນຊົນ



(ສພຊ) - ຕອນບ່າຍວັນທີ 27 ທັນວາ 2024 ທີ່ຫໍສະພາແຫ່ງຊາດ (ສພຊ), ທ່ານປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ໄດ້ພົບປະໂອ້ລົມນັກຂ່າວສື່ມວນຊົນໃນໂອກາດວັນອອກໜັງສືພິມ "ຜູ້ແທນປະຊາຊົນ" ສະບັບທີ 1,000 ແລະ ວັນສ້າງຕັ້ງສື່ມວນຊົນສະພາແຫ່ງຊາດ ຄົບ ຮອບ 28 ປີ

ອ່ານຕໍ່ໜ້າ 8




## ກາດວ່າຈະຮັບຮອງລັດຖະທຳມະນູນຕົ້ນເດືອນເມສາ



(ສພຊ) - ຕອນເຊົ້າວັນທີ 24 ທັນວານີ້ ທີ່ສະພາແຫ່ງຊາດ (ສພຊ) ຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ ສະບັບປີ 2015 (ຄລຊ) ໄດ້ຈັດກອງປະຊຸມໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ, ປະທານ ຄລຊ ເຊິ່ງມີບັນດາທ່ານໃນຄະນະກຳມະການ ແລະ ອະນຸກຳມະການຕ່າງໆຂອງ ຄລຊ ເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງລາຍງານຜົນການຄົ້ນຄວ້າ ແລະ ປັບປຸງເນື້ອໃນຮ່າງລັດຖະທຳມະນູນຕາມການປະກອບຄຳເຫັນຂອງສະມາຊິກສະພາແຫ່ງຊາດໃນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ຊຸດທີ IX ຄັ້ງວັນທີ 29 ພະຈິກ 2024 ເຊິ່ງບັນດາຄຳເຫັນເຫຼົ່ານັ້ນ ຄະນະຮັບຜິດຊອບໄດ້ຈັດກອງປະຊຸມກວດກາ, ຄົ້ນຄວ້າ ແລະ ປັບປຸງເນື້ອໃນດັ່ງກ່າວໃນຄັ້ງວັນທີ 7-8 ທັນວາຜ່ານມາ.

ອ່ານຕໍ່ໜ້າ 8

## ກອງປະຊຸມຮຽບຮຽງເນື້ອໃນ 2 ຮ່າງກົດໝາຍ



(ສພຊ) - ກອງປະຊຸມຮຽບຮຽງເນື້ອໃນກົດໝາຍວ່າດ້ວຍສະຫະພັນແມ່ຍິງລາວ, ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ ໄດ້ຈັດຂຶ້ນໃນວັນທີ 28-29 ທັນວາ 2024 ທີ່ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ປອ. ນາງສູນທອນ ໄຊຍະຈັກຮອງປະທານສະພາແຫ່ງຊາດ (ສພຊ), ມີທ່ານ ນາງ ອາລີ ວົງໜໍ່ບຸນທຳ ປະທານຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ (ສສຍລ), ບັນດາທ່ານປະທານ ແລະ ຮອງປະທານກຳມາທິການທີ່ກ່ຽວ

ອ່ານຕໍ່ໜ້າ 7

## ຮຽບຮຽງເນື້ອໃນ 2 ຮ່າງກົດໝາຍ



(ສພຊ) - ວັນທີ 17-19 ທັນວານີ້ ທີ່ເມືອງແກ້ວອຸດົມ ແຂວງວຽງຈັນ ໄດ້ມີກອງປະຊຸມຮຽບຮຽງເນື້ອໃນສອງຮ່າງກົດໝາຍສະບັບປັບປຸງຄື: ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ແລະ ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ໂດຍການເປັນປະທານຂອງທ່ານສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ (ສພຊ) ເຊິ່ງມີບັນດາທ່ານປະທານ ແລະ ຮອງປະທານກຳມາທິການທີ່ກ່ຽວຂ້ອງຂອງ ສພຊ, ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ຮອງປະທານສານປະຊາຊົນສູງສຸດ, ຮອງລັດຖະມົນຕີກະຊວງຍຸຕິທຳ, ຮອງຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ, ຮອງຫົວໜ້າຫ້ອງວ່າການ

ອ່ານຕໍ່ໜ້າ 4

## ຖອດຖອນບົດຮຽນວຽກງານສ້າງຄວາມເຂັ້ມແຂງ



(ສພຊ) - ວັນທີ 18-20 ທັນວາຜ່ານມາ ທີ່ເມືອງວັງວຽງ ແຂວງວຽງຈັນ ໄດ້ມີກອງປະຊຸມຖອດຖອນບົດຮຽນກ່ຽວກັບວຽກງານສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາແຫ່ງຊາດ (ສສຊ), ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) ແລະ ປະເມີນການຈັດຕັ້ງປະຕິບັດພາລະບົດບາດຂອງສະພາແຫ່ງຊາດ (ສພຊ), ສະພາປະຊາຊົນຂັ້ນແຂວງ (ສພຂ) ໂດຍການເປັນປະທານຂອງທ່ານ ສຸບັນ ສະວະບຸດ ກຳມະການຄະນະປະຈຳ, ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ (ກວສຊ); ເຂົ້າຮ່ວມມີທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ, ບັນດາທ່ານຮອງປະທານກຳມາທິການ, ຮອງເລຂາທິການ, ຮອງຫົວໜ້າສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ, ສສຊ ທີ່ເປັນກຳມະການສັງກັດ ກວສຊ ແລະ ພະນັກງານຈາກພາກສ່ວນທີ່ກ່ຽວຂ້ອງ.

ທັງນີ້, ກໍເພື່ອສະຫຼຸບຕີລາຄາຄືນກ່ຽວກັບວຽກງານສ້າງຄວາມເຂັ້ມແຂງໃຫ້ແກ່ ສສຊ, ສສຂ ແລະ ພະນັກງານທີ່ກ່ຽວຂ້ອງ ເປັນຕົ້ນ: ເນື້ອໃນ, ຮູບແບບ, ວິທີການເຝິກອົບຮົມໃນຂັ້ນຕໍ່ໄປ ເພື່ອເຮັດໃຫ້ວຽກງານດັ່ງກ່າວມີຄຸນນະພາບຍິ່ງໆຂຶ້ນ ທັງຮັບປະກັນໃຫ້ວຽກງານຍົກສູງຂີດຄວາມສາມາດ ມີປະສິດທິຜົນ; ປະເມີນການປະຕິບັດພາ

ອ່ານຕໍ່ໜ້າ 4

## ພິທີມອບ-ຮັບລົດຖີບຈາກໂຄງການນ້ຳໃຈຮັກລາວ




(ສພຊ) - ວັນທີ 25 ທັນວາຜ່ານມາ ທີ່ສະພາແຫ່ງຊາດ ໄດ້ມີພິທີມອບ-ຮັບ ແລະ ແຈກຢາຍລົດຖີບຈາກໂຄງການ "ນ້ຳໃຈຮັກລາວ" ໃຫ້ແກ່ນັກຮຽນໃນ ສປປລາວ ຈຳນວນ 1,000 ຄັນລວມມູນຄ່າ 495 ພັນຢວນ (ປະມານ 1.460 ຕື້ກີບ); ຕາງໜ້າກ່າວຮັບໂດຍສະຫາຍ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ, ປະທານຄະນະສັນ

ອ່ານຕໍ່ໜ້າ 5




ເຂົາຫາມໝູ... (ໜ້າ 7)




ນະໂຍບາຍ... (ໜ້າ 7)



ຫວຽດນາມ ອາວຸນແຜນ... (ໜ້າ 11)

ສະພາຕໍ່າ Ethiopia ... (ໜ້າ 10)

# ຮຽບຮຽງເນື້ອໃນ 2 ຮ່າງກົດໝາຍ



(ສພຊ)-ວັນທີ25-27 ທັນວານີ້ ທີ່ເມືອງແກ້ວອຸດົມ ແຂວງວຽງຈັນ ໄດ້ມີກອງປະຊຸມຮຽບຮຽງເນື້ອໃນສອງຮ່າງກົດໝາຍຄື: ກົດໝາຍວ່າດ້ວຍການສຶກສາ (ປັບປຸງ) ແລະ ກົດໝາຍວ່າດ້ວຍການພັດທະນາສີມືແຮງງານ (ສ້າງໃໝ່) ໂດຍການເປັນປະທານຂອງທ່ານຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ (ສພຊ) ເຊິ່ງມີບັນດາທ່ານປະທານ ແລະ ຮອງປະທານກຳມາທິການທີ່ກ່ຽວຂ້ອງຂອງ ສພຊ, ຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ, ຮອງລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ,ຮອງລັດຖະມົນຕີກະຊວງຍຸຕິທຳ,ຮອງຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ພ້ອມດ້ວຍຄະນະກົມ, ຄະນະພະແນກ ແລະ ພະນັກງານຈາກ ສພຊ ແລະພາກສ່ວນທີ່ກ່ຽວຂ້ອງ; ທັງນີ້, ກໍເພື່ອນຳເອົາຄຳເຫັນຂອງສະມາຊິກສະພາແຫ່ງຊາດ (ສສຊ) ທີ່ໄດ້ປະກອບໃສ່ຮ່າງກົດໝາຍສອງສະບັບນີ້ ມາພິຈາລະນາ, ປັບປຸງໃສ່ເນື້ອໃນສອງຮ່າງກົດໝາຍໃຫ້ມີຄວາມຈະແຈ້ງ, ຄົບຖ້ວນ ແລະ ຮັດກຸມ.

ທ່ານຄຳໃບດຳລັດກ່າວວ່າ: ກອງປະຊຸມຄັ້ງນີ້ ແມ່ນສຸມໃສ່ຄົ້ນຄວ້າຢ່າງລະອຽດ ແລະ ເລິກເຊິ່ງເພື່ອເລືອກເຟັ້ນເອົາຄຳເຫັນຂອງສະມາຊິກສະພາແຫ່ງຊາດໃນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີIX ມາພິຈາລະນາປັບປຸງໃສ່ເນື້ອໃນກົດໝາຍ ແລະ ເນື່ອງຈາກເປັນການຮຽບຮຽງຄັ້ງສຸດທ້າຍ, ນອກຈາກຄຳເຫັນຂອງຜູ້ແທນແລ້ວ ຖ້າຫາກຍັງເຫັນວ່າມີຈຸດໃດ, ຄຳສັບຄຳເວົ້າໃດ ທີ່ບໍ່ຈະແຈ້ງ ແລະ ສອດຄ່ອງ ກໍຈະຍົກຂຶ້ນຕື່ມ ເພື່ອເຮັດໃຫ້ເນື້ອໃນຂອງຮ່າງກົດໝາຍມີຄວາມຄົບຖ້ວນ,ສອດຄ່ອງ,ຮັດກຸມ ແລະ ສາມາດປະຕິບັດໄດ້, ກ່ອນນຳສະເໜີກອງປະຊຸມຄະນະປະຈຳສະພາແຫ່ງຊາດ ແລະ ສະເໜີປະທານສະພາແຫ່ງຊາດລົງລາຍເຊັນໃນກົດໝາຍ 2 ສະບັບດັ່ງກ່າວ.

ຜູ້ເຂົ້າຮ່ວມໄດ້ສຸມສະຕິປັນຍາຄົ້ນຄວ້າ, ພິຈາລະນາຄືນແຕ່ລະບັນຫາທີ່ ສສຊ ຕັ້ງຂຶ້ນ ແລະ ບັນຫາອື່ນໆ ຢ່າງເລິກເຊິ່ງ ແລະ ຮອບດ້ານ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກມູນນິທິເອເຊຍ (The Asia Foundation) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ.

**(ສອນສັກ ວັນວິໄຊ)**

# ກສຕສ ຕິດຕາມກວດກາຢູ່ 3 ແຂວງພາກໃຕ້



(ສພຊ)-ວັນທີ18-22 ທັນວາ 2024 ທ່ານ ນາງ ປິ່ງຄຳ ລາຊະສິມມາກຳມະການສູນກາງພັກ, ຄະນະປະຈຳສະພາແຫ່ງຊາດ,ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ(ກສຕສ)ພ້ອມດ້ວຍຄະນະ ໄດ້ລົງເຄື່ອນໄຫວເຮັດວຽກຢູ່ແຂວງອັດຕະປື, ເຊກອງ ແລະ ສາລະວັນ ເພື່ອຕິດຕາມກວດກາແລະເກັບກຳຂໍ້ມູນກ່ຽວກັບການຂົນສົ່ງແຮ່ທາດ ແລະ ການມີສ່ວນຮ່ວມເຂົ້າໃນການບູລະນະ, ສ້ອມແປງເສັ້ນທາງ ທີ່ເປັນສາເຫດເຮັດໃຫ້ເສັ້ນທາງເປ່ເພ ແລະ ການຈັດຕັ້ງປະຕິບັດນິຕິກຳ ຕິດພັນກັບການຈັດຕັ້ງປະຕິບັດບັນດາໂຄງການເຊົ່າ-ສຳປະທານທີ່ດິນຂອງລັດ ແລະ ການອອກໃບຕາດິນ ເພື່ອຊອກໃຫ້ເຫັນດ້ານດີທີ່ຄວນເສີມຂະຫຍາຍຊຸກຍູ້ ແລະ ດ້ານອ່ອນຂໍ້ຄົງຄ້າງທີ່ຈະຕ້ອງຊອກວິທີແກ້ໄຂ ແນໃສ່ໃຫ້ພາກສ່ວນກ່ຽວຂ້ອງຈັດຕັ້ງປະຕິບັດຖືກຕ້ອງຕາມກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຕ່ລະໄລຍະ ໂດຍໄດ້ປະຊຸມຮ່ວມກັບທ່ານເຈົ້າແຂວງ, ປະທານ ແລະ ຮອງປະທານສະພາປະຊາຊົນແຂວງ, ບັນດາພະແນກການ ແລະ ພາກສ່ວນທີ່ກ່ຽວຂ້ອງຂອງແຂວງ.

ໃນກອງປະຊຸມ, ທ່ານ ນາງ ປິ່ງຄຳ ລາຊະສິມມາ ໄດ້ເຈາະຈີ້ມໃຫ້ພາກສ່ວນທີ່ກ່ຽວຂ້ອງລາຍງານເປັນຕົ້ນ: ການຈັດຕັ້ງປະຕິບັດບັນດາໂຄງການເຊົ່າ-ສຳປະທານທີ່ດິນແລະການຂຶ້ນທະບຽນອອກໃບຕາດິນໃນທ້ອງຖິ່ນໄລຍະຜ່ານມາ; ການອະນຸມັດໂຄງການກໍ່ສ້າງ, ບູລະນະສ້ອມແປງເສັ້ນທາງ ປີ 2024, ການນຳໃຊ້ງົບປະມານເຂົ້າໃນໂຄງການ; ການຄຸ້ມຄອງນ້ຳໜັກລົດຂົນສົ່ງສິນຄ້າ, ຂົນສົ່ງແຮ່ທາດຢູ່ພາຍໃນແຂວງ; ກົນໄກການຄຸ້ມຄອງ,ຕິດຕາມກວດກາ,ການປະຕິບັດມາດຕະການຕໍ່ຜູ້ລະເມີດ; ການຕິດຕາມກວດກາແລະເກັບກຳສະພາບເສັ້ນທາງທີ່ເປ່ເພ, ເສຍຫາຍ ຈາກການຂົນສົ່ງແຮ່ທາດ, ເຄື່ອງອຸປະກອນ, ເຄື່ອງຈັກ ທີ່ນຳມາຮັບໃຊ້ບັນດາໂຄງການລົງທຶນຂະໜາດໃຫຍ່; ການມີສ່ວນຮ່ວມ ແລະ ປະກອບພັນທະເຂົ້າໃນການກໍ່ສ້າງ ແລະ ບູລະນະສ້ອມແປງເສັ້ນທາງທີ່ເປ່ເພຈາກການນຳໃຊ້ຂອງບັນດາໂຄງການລົງທຶນຂະໜາດໃຫຍ່, ໂຄງການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ, ບໍລິສັດຂົນສົ່ງແຮ່ທາດ; ການຈັດຕັ້ງປະຕິບັດກົດໝາຍ, ນິຕິກຳໃຕ້ກົດໝາຍ ທີ່ຕິດພັນກັບການຈັດຕັ້ງປະຕິບັດວຽກງານການກໍ່ສ້າງ, ບູລະນະສ້ອມແປງເສັ້ນທາງແລະວຽກງານຂົນສົ່ງເປັນຕົ້ນກົດໝາຍວ່າດ້ວຍທາງຫຼວງ, ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ກົດໝາຍວ່າດ້ວຍການລົງທຶນຂອງລັດ, ກົດໝາຍວ່າດ້ວຍການຂົນສົ່ງທາງບົກ ແລະ ນິຕິກຳອື່ນທີ່ກ່ຽວຂ້ອງ. ຈາກນັ້ນ, ຜູ້ເຂົ້າຮ່ວມກໍໄດ້ສົນທະນາແລກປ່ຽນ, ປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາ, ແທດເໝາະກັບສະພາບຕົວຈິງ ໃຫ້ເຫັນໄດ້ດ້ານດີ, ດ້ານອ່ອນ, ບັນຫາຄົງຄ້າງ ແລະ ຊອກຫາວິທີແກ້ໄຂກ່ຽວກັບການຈັດຕັ້ງປະຕິບັດ ແລະການມີສ່ວນຮ່ວມໃນການບູລະນະສ້ອມແປງເສັ້ນທາງເປ່ເພຈາກການຂົນສົ່ງແຮ່ທາດເພື່ອເປັນຂໍ້ມູນພື້ນຖານໃນການສັງລວມລາຍງານຕໍ່ກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ ແລະຄະນະປະຈຳສະພາແຫ່ງຊາດ.

ນອກຈາກນີ້, ຍັງໄດ້ລົງເຮັດວຽກຢູ່ພາກສະໜາມຂອງບັນດາໂຄງການລົງທຶນຂະໜາດໃຫຍ່ ເປັນຕົ້ນ: ໂຄງການພະລັງງານລົມ (ມອນຊູນ ວິນ ພາວເວີ), ໂຄງການຂຸດຄົ້ນແຮ່ບົກຊິດຂອງບໍລິສັດ ລາວບໍລິການ, ບໍລິສັດເບີນດາວ ກໍ່ສ້າງຂົວ-ທາງ ແລະ ເຄຫາສະຖານ ຈຳກັດ ແລະ ລົງຕິດຕາມເສັ້ນທາງຂົນສົ່ງແຮ່ທາດ, ເຄື່ອງອຸປະກອນ, ເຄື່ອງຈັກ ທີ່ນຳມາຮັບໃຊ້ບັນດາໂຄງການລົງທຶນຄື: ເສັ້ນທາງຫຼວງແຫ່ງຊາດ ເລກທີ16b ອອກໄປຫາດ່ານສາກົນດາກຕະອອກ ແຂວງເຊກອງ, ເສັ້ນທາງຫຼວງແຫ່ງຊາດ ເລກທີ 15 ອອກໄປຫາດ່ານສາກົນລາໄລ ແຂວງສາລະວັນ, ເສັ້ນທາງຫຼວງແຫ່ງຊາດ ເລກທີ 18b ອອກໄປຫາດ່ານສາກົນພູເກືອ ແຂວງອັດຕະປື ໂດຍໄດ້ຮັບຟັງລາຍງານການດຳເນີນຂອງໂຄງການໂດຍຫຍໍ້ ໃນນັ້ນໄດ້ຍົກໃຫ້ເຫັນການມີສ່ວນຮ່ວມພັດທະນາເຂດບ້ານຕິດກັບໂຄງການ ເປັນຕົ້ນ: ຊ່ວຍດ້ານງົບປະມານບໍລິຫານ, ປະກອບສ່ວນຊ່ວຍເຫຼືອຫຼາຍດ້ານ ເຊິ່ງໃນແຜນປີ 2025 ໂຄງການຍັງຈະໄດ້ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສືບຕໍ່ສ້ອມແປງເສັ້ນທາງທີ່ເປ່ເພ.

# ກອງປະຊຸມໃຫຍ່ຄັ້ງທີ II ກຳມະບານຮາກຖານ ກວສຊ




(ສພຊ) - ກອງປະຊຸມໃຫຍ່ຄັ້ງທີ II ຂອງກຳມະບານຮາກຖານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ (ກວສຊ) ໄດ້ຈັດຂຶ້ນເມື່ອຕອນບ່າຍວັນທີ 16 ທັນວາຜ່ານມາ ໂດຍການເປັນປະທານຂອງສະຫາຍ ສີສຸວັນ ສິມເພັດ ປະທານກຳມະບານຮາກຖານ ກວສຊ; ມີສະຫາຍ ສຸບັນ ສະອະບຸດ ຄະນະບໍລິຫານງານພັກສະພາແຫ່ງຊາດ (ສພຊ), ເລຂາໜ່ວຍພັກຮາກຖານ ກວສຊ, ສະຫາຍ ໂພສີ ເຕມເມລາດ ຕາງໜ້າຄະນະບໍລິຫານງານສະຫະພັນກຳມະບານສະພາແຫ່ງຊາດ ແລະ ຕາງໜ້າກຳມະບານຮາກຖານພາຍໃນ ສພຊ ເຂົ້າຮ່ວມທັງໝົດ 30 ສະຫາຍ, ຍິງ 9 ສະຫາຍ.

ກອງປະຊຸມໄດ້ເຫັນດີເປັນເອກະພາບພິຈາລະນາແລະຮັບຮອງເອົາບົດລາຍງານການເມືອງຂອງກຳມະບານຮາກຖານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ເຊິ່ງປະກອບມີ 2 ພາກຄື: ພາກທີ 1 ຕີລາຄາສະພາບການເຄື່ອນໄຫວວຽກງານຂອງກຳມະບານຮາກຖານ ໃນໄລຍະ 5 ປີຜ່ານມາ (2020-2024)ເຊິ່ງຍົກໃຫ້ເຫັນດ້ານດີ-ຜົນສຳເລັດ, ຂໍ້ຄົງຄ້າງ ແລະ ສາເຫດທີ່ພາໃຫ້ມີຂໍ້ຄົງຄ້າງ ທີ່ຈະໄດ້ສືບຕໍ່ປັບປຸງແກ້ໄຂເພື່ອຮັບປະກັນໃຫ້ການເຄື່ອນໄຫວວຽກງານຂອງກຳມະບານຮາກຖານ ກວສຊ ສາມາດຈັດຕັ້ງປະຕິບັດໄດ້ດີຂຶ້ນໃນຕໍ່ໜ້າ; ພາກທີ 2 ທິດທາງແຜນການເຄື່ອນໄຫວວຽກງານໃນໄລຍະ 5 ປີຕໍ່ໜ້າ (2025-2029) ໃນນີ້, ວຽກງານສຳຄັນຕົ້ນຕໍແມ່ນການເພີ່ມທະວີການສຶກສາອົບຮົມການເມືອງ-ແນວຄິດ ຕິດພັນກັບການຜັນຂະຫຍາຍຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 5 ເປັນເຈົ້າ ເຂົ້າໃນວຽກງານວິຊາສະເພາະຢ່າງມີປະສິດທິຜົນ ເພື່ອເປັນເສນາທິການທີ່ມີຄວາມເຂັ້ມແຂງໃຫ້ແກ່ໜ່ວຍພັກຮາກຖານ ກວສຊ. ພ້ອມນັ້ນ, ຍັງໄດ້ຮັບຟັງການຜ່ານບົດສຳຫຼວດການນຳພາຂອງຄະນະກຳມະບານຮາກຖານ ກວສຊ ກ່ຽວກັບການຊີ້ນຳ-ນຳພາຂອງຕົນຕໍ່ວຽກງານກຳມະບານຕະຫຼອດໄລຍະ5ປີຜ່ານມາເຊິ່ງຍົກໃຫ້ເຫັນດ້ານດີ-ຜົນສຳເລັດ, ຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້ ທີ່ຄະນະກຳມະບານຮາກຖານຊຸດໃໝ່ ຈະຕ້ອງນຳໄປເປັນແນວທາງ, ບົດຮຽນໃນການສືບຕໍ່ປັບປຸງແກ້ໄຂ ເພື່ອຮັບປະກັນໃຫ້ການເຄື່ອນໄຫວວຽກງານກຳມະບານ ກໍຄືຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ II ຂອງກຳມະບານຮາກຖານ ກວສຊ ບັນລຸຕາມຄາດໝາຍທີ່ວາງໄວ້.

ຜູ້ແທນກອງປະຊຸມ 22 ສະຫາຍ, ຍິງ 5 ສະຫາຍ ໄດ້ປະຕິບັດຕາມຫຼັກການປະຊາທິປະໄຕ ໃຊ້ສິດຂອງຕົນປ່ອນບັດຄັດເລືອກເອົາຄະນະກຳມະບານຮາກຖານ ກວສຊ ຊຸດທີ III ເຊິ່ງມີຜູ້ລົງສະໝັກທີ່ມີມາດຕະຖານ, ເງື່ອນໄຂຄົບຖ້ວນ 7 ສະຫາຍ, ຍິງ 3 ສະຫາຍ; ກອງປະຊຸມໄດ້ຕົກລົງເຫັນດີເອກະພາບເລືອກເອົາ 5 ສະຫາຍ, ຍິງ 3 ສະຫາຍຄື: ສະຫາຍ ສີສຸວັນ ສິມເພັດ ເປັນປະທານ, ສະຫາຍ ປອ. ນາງ ມະນີວັນ ລໍເປູຍຢາວ ເປັນຮອງປະທານ ທັງເປັນປະທານກວດກາ, ສະຫາຍ ນາງ ພັດສະລີ ປາທີລາດ ເປັນຄະນະ ທັງເປັນຮອງປະທານກວດກາ, ສະຫາຍ ໄຈຢ່າງ ມະນີວົງຢ່າລີ ແລະ ສະຫາຍ ນາງເວີນພັນທະວິຄູນເປັນຄະນະ.

ສະຫາຍ ສຸບັນ ສະອະບຸດ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນສຳເລັດໃນໄລຍະ5ປີຜ່ານມາ ແລະ ເນັ້ນໜັກໃຫ້ເພີ່ມທະວີເອົາໃຈໃສ່ປັບປຸງໂຄງປະກອບການຈັດຕັ້ງຂອງກຳມະບານຮາກຖານຕົນ ໃຫ້ມີຄວາມສົມດູນທັງຮີບຮ້ອນຈັດຕັ້ງແບ່ງຄວາມຮັບຜິດຊອບພາຍໃນຄະນະໃຫ້ລະອຽດ ເພື່ອຮັບປະກັນໃຫ້ການເຄື່ອນໄຫວວຽກງານເປັນລະບົບ ແລະ ສະດວກໃນການຈັດຕັ້ງປະຕິບັດ; ສືບຕໍ່ເອົາໃຈໃສ່ສຶກສາອົບຮົມວຽກງານການເມືອງ-ແນວຄິດ ໃຫ້ເປັນປົກກະຕິຕໍ່ເນື່ອງ, ຜັນຂະຫຍາຍປະຕິບັດຂໍ້ແຂ່ງຂັນ 5 ເປັນເຈົ້າຂອງກຳມະບານ ເຂົ້າໃນການຈັດຕັ້ງປະຕິບັດວຽກງານວິຊາສະເພາະ ດ້ວຍຄວາມຮັບຜິດຊອບສູງທັງຍົກສູງຄວາມຮູ້ຄວາມສາມາດທາງດ້ານວິຊາສະເພາະ, ເຕັກໂນໂລຊີແລະພາສາຕ່າງປະເທດ ເພື່ອຮັບປະກັນການເປັນເສນາທິການທີ່ມີຄວາມເຂັ້ມແຂງໃຫ້ແກ່ກຳມາທິການຕົນກໍຄືສະພາແຫ່ງຊາດ ໃນການເຊື່ອມໂຍງກັບພາກພື້ນ ແລະ ສາກົນ; ເຕົ້າໂຮມຄວາມສາມັກຄີພາຍໃນ, ຊຸກຍູ້ສະມາຊິກກຳມະບານປະກອບສ່ວນ ແລະ ເຂົ້າຮ່ວມກິດຈະກຳລວມຕ່າງໆຂອງອົງການຈັດຕັ້ງ ຢ່າງຫ້າວຫັນ ແລະ ເປັນຂະບວນການຟົດຟື້ນ; ຕ້ອງກຳແໜ້ນກົດໝາຍວ່າດ້ວຍກຳມະບານລາວ ໂດຍສະເພາະແມ່ນບັນດາຂໍ້ຫ້າມຕ່າງໆ ແລະ ການນຳໃຊ້ຂໍ້ມູນຂ່າວສານ ກໍຕ້ອງມີສະຕິສູງ, ນຳໃຊ້ແຫຼ່ງຂໍ້ມູນທີ່ເປັນທາງການ ແລະ ເຊື່ອຖືໄດ້ ໃນການພິຈາລະນາ ແລະ ຕັດສິນບັນຫາ ເພື່ອຫຼີກລ່ຽງຜົນກະທົບຕ່າງໆ.

**(ນາງ ອາລິນ ສຸພົມມະປະດິດ)**

# ສ້າງຄວາມເຂັ້ມແຂງວຽກງານ ຄຸ້ມຄອງແຜນການລົງທຶນຂອງລັດ



(ສພຊ) - ເພື່ອຜັນຂະຫຍາຍບັນດານິຕິກຳທີ່ກ່ຽວຂ້ອງ ເປັນຕົ້ນ: ກົດໝາຍວ່າດ້ວຍການລົງທຶນຂອງລັດ, ຄຳແນະນຳການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການລົງທຶນຂອງລັດໂດຍສະເພາະການສ້າງແຜນການ,ການປະເມີນໂຄງການເຂົ້າແຜນ, ການຄຸ້ມຄອງແຜນການລົງທຶນຂອງລັດ, ການຄົ້ນຄວ້າດັດແກ້ມູນຄ່າໂຄງການ, ການຊຳລະງົບປະມານແລະວຽກປົ່ນອ້ອມອື່ນໆ ໃຫ້ແກ່ຄະນະນຳສະພາປະຊາຊົນແຂວງ (ສພຂ) ພາກເໜືອ,ພາກກາງແລະໜ່ວຍງານຮັບຜິດຊອບຄຸ້ມຄອງແຜນການລົງທຶນຢູ່ສູນກາງແລະທ້ອງຖິ່ນ ໃຫ້ຮັບຮູ້, ເຂົ້າໃຈ ພ້ອມທັງນຳໄປຈັດຕັ້ງປະຕິບັດເຂົ້າສູ່ວຽກງານຕົວຈິງ; ເພື່ອປຶກສາຫາລືກົນໄກປະສານງານລະຫວ່າງສູນກາງກັບທ້ອງຖິ່ນ ໃນການຄຸ້ມຄອງແຜນການລົງທຶນຂອງລັດຂອງສະພາແຫ່ງຊາດ (ສພຊ) ທີ່ຕັ້ງຢູ່ 9 ແຂວງພາກເໜືອ ແລະ ພາກກາງ ໃຫ້ມີຄວາມໂລ່ງລ່ຽນແລະໃກ້ຊິດຕິດແທດກັນຫຼາຍຂຶ້ນ ທັງເປັນການພົບປະ ແລະ ແລກປ່ຽນບົດຮຽນວຽກງານຄຸ້ມຄອງແຜນການລົງທຶນຂອງລັດຂອງ ສພຊ ລະຫວ່າງສູນກາງກັບທ້ອງຖິ່ນ ໂດຍສະເພາະກົມບໍລິຫານ-ພິທີການ ເຊິ່ງເປັນເສນາທິການໃຫ້ແກ່ຄະນະເລຂາທິການສະພາແຫ່ງຊາດ ກັບ ສະມາຊິກສະພາແຫ່ງຊາດ ແລະ ຄະນະເລຂາທິການ ສພຂ ເພື່ອໃຫ້ຮັບຮູ້ ແລະ ເຂົ້າໃຈກ່ຽວກັບການເຄື່ອນໄຫວວຽກງານຄຸ້ມຄອງແຜນການລົງທຶນຂອງລັດຂອງ ສພຊ ນັບມື້ນັບຫຼາຍຂຶ້ນ.

ວັນທີ 20-21 ທັນວານີ້ ທີ່ຫ້ອງປະຊຸມຫ້ອງວ່າການປົກຄອງແຂວງອຸດົມໄຊ ໄດ້ມີກອງປະຊຸມເຝິກອົບຮົມວຽກງານຄຸ້ມຄອງແຜນການລົງທຶນຂອງລັດຂອງສະພາແຫ່ງຊາດ ໃນການສ້າງຄວາມເຂັ້ມແຂງໃຫ້ແກ່ຄະນະນຳຂອງສະພາປະຊາຊົນຂັ້ນແຂວງ 9 ແຂວງພາກເໜືອ ແລະ ພາກກາງ ຄື: ຜົ້ງສາລີ, ຫຼວງນ້ຳທາ, ອຸດົມໄຊ, ບໍ່ແກ້ວ, ຫຼວງພະບາງ, ໄຊຍະບູລີ, ຫົວພັນ, ຊຽງຂວາງ ແລະ ຄຳມ່ວນ ໂດຍການເປັນປະທານຮ່ວມຂອງທ່ານນາງ ອຳໄພວອນ ລ້ອມບຸນແພງ ເລຂາທິການສະພາແຫ່ງຊາດແລະທ່ານ ຄຳດີ ວົງລ້ອມ ປະທານສະພາປະຊາຊົນແຂວງອຸດົມໄຊ; ເຂົ້າຮ່ວມມີບັນດາທ່ານວິທະຍາກອນຈາກກະຊວງແຜນການແລະການລົງທຶນແລະ ຈາກສພຊພ້ອມດ້ວຍສຳມະນາກອນຈາກພາກສ່ວນທີ່ກ່ຽວຂ້ອງ ແລະ ແຂກຖືກເຊີນ.

ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ໄດ້ມີຄຳເຫັນເນັ້ນໜັກໃຫ້ຜູ້ເຂົ້າຮ່ວມເອົາໃຈໃສ່ຮັບຟັງ ແລະ ສຸມສະຕິປັນຍາເຂົ້າໃນການຄົ້ນຄວ້າບັນດາເນື້ອໃນທີ່ນຳມາສະເໜີຢ່າງຝຶກຝົນ, ສ້າງສັນ,ແລກປ່ຽນບົດຮຽນທາງດ້ານທິດສະດີແລະສົມທຽບໃສ່ການປະຕິບັດວຽກງານຕົວຈິງ; ນອກຈາກບົດຮຽນແລ້ວ, ຍັງມີການສົນທະນາແລກປ່ຽນປະສົບການຕົວຈິງທີ່ໄດ້ພົບພໍ້ມາ ໂດຍສະເພາະແມ່ນການຄຸ້ມຄອງແຜນການລົງທຶນຂອງລັດຢູ່ສະພາປະຊາຊົນແຂວງ. ສະນັ້ນ, ຖ້າມີບັນຫາໃດເພີ່ມຕື່ມ, ເໝາະສົມ ທີ່ນອນຢູ່ໃນຂອບເຂດຄວາມຮັບຜິດຊອບ, ສິດ ແລະ ໜ້າທີ່ ກໍສາມາດນຳມາແລກປ່ຽນບົດຮຽນ ແລະ ສະເໜີຕໍ່ການຈັດຕັ້ງ ເພື່ອຄວາມເຂົ້າໃຈເປັນເອກະພາບຕາມກົດໝາຍ, ນິຕິກຳທີ່ວາງອອກໃນແຕ່ລະໄລຍະແລະສະພາບຄວາມເປັນຈິງຂອງວຽກງານສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃນໄລຍະໃໝ່.

ຜູ້ເຂົ້າຮ່ວມໄດ້ຮັບຟັງບົດສະເໜີກ່ຽວກັບຂັ້ນຕອນການວາງແຜນການລົງທຶນຂອງລັດ, ເຜີຍແຜ່ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການລົງທຶນສະບັບເລກທີ889/ກຜທ, ວິທີການຄົ້ນຄວ້າຈັດສັນເພດານງົບປະມານລົງທຶນຂອງລັດໃຫ້ບັນດາກະຊວງ-ອົງການ, ກົນໄກ-ວິທີການຄຸ້ມຄອງການລົງທຶນລັດ, ການຕິດຕາມກວດກາ ແລະ ການຢັ້ງຢືນເອກະສານຊຳລະໂຄງການລົງທຶນ; ຄຳແນະນຳວ່າດ້ວຍການຈັດຕັ້ງປະຕິບັດວຽກງານປະເມີນໂຄງການລົງທຶນຂອງລັດ ສະບັບເລກທີ 606/ກຜທ, ຫຼັກວິຊາການຂອງການປະເມີນ, ການປະເມີນໂຄງການສະເໜີໃໝ່, ການປະເມີນຄືນໂຄງການລົງທຶນຂອງລັດໃນກໍລະນີມີການດັດແກ້ ຫຼື ປ່ຽນມູນຄ່າທີ່ມີການປ່ຽນແປງດ້ານໂຄງສ້າງຕາມການຢັ້ງຢືນຂອງຂະແໜງການເຕັກນິກ; ບົດຮຽນກ່ຽວກັບການພິຈາລະນາຮັບຮອງ ແລະ ການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ກ່ຽວກັບການຈັດສັນງົບປະມານໂຄງການລົງທຶນຂອງລັດ; ບົດຮຽນກ່ຽວກັບການຄຸ້ມຄອງແຜນການລົງທຶນຂອງລັດຂອງຄະນະເລຂາທິການສະພາແຫງຊາດ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌ (STEPS) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ ສົມທົບກັບງົບປະມານຂອງຄະນະເລຂາທິການສະພາແຫ່ງຊາດ.

**(ນາງ ອາລິນ ສຸພົມມະປະດິດ)**

# ຮຽບຮຽງກົດໝາຍການກວດສອບອິດສະຫຼະ




(ສພຊ)-ວັນທີ 23-24 ທັນວານີ້ ທີ່ເມືອງແກ້ວອຸດົມ ແຂວງວຽງຈັນ ໄດ້ມີກອງປະຊຸມຮຽບຮຽງເນື້ອໃນກົດໝາຍວ່າດ້ວຍການກວດສອບອິດສະຫຼະ ສະບັບປັບປຸງ ໂດຍການເປັນປະທານຂອງທ່ານ ຄຳແພງ ວິລະພັນ ຄະນະປະຈຳສະພາແຫ່ງຊາດ (ສພຊ), ປະທານກຳມາທິການກົດໝາຍ ເຊິ່ງມີບັນດາທ່ານປະທານ ແລະ ຮອງປະທານກຳມາທິການທີ່ກ່ຽວຂ້ອງຂອງ ສພຊ, ຮອງລັດຖະມົນຕີກະຊວງການເງິນ, ຮອງລັດຖະມົນຕີກະຊວງຍຸຕິທຳ, ຮອງຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ພ້ອມດ້ວຍຄະນະກົມ, ຄະນະພະແນກ ແລະພະນັກງານຈາກສພຊແລະພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມ 50 ກວ່າທ່ານ; ທັງນີ້, ກໍເພື່ອນຳເອົາຄຳເຫັນຂອງສະມາຊິກສະພາແຫ່ງຊາດ(ສສຊ)ທີ່ໄດ້ປະກອບໃສ່ກົດໝາຍສະບັບນີ້ ມາພິຈາລະນາ, ປັບປຸງໃສ່ເນື້ອໃນກົດໝາຍ ໃຫ້ມີຄວາມຈະແຈ້ງ, ຄົບຖ້ວນ ແລະ ຮັດກຸມ.

ທ່ານ ຄຳແພງ ວິລະພັນ ກ່າວວ່າ: ກອງປະຊຸມຄັ້ງນີ້ ຈະໄດ້ຄົ້ນຄວ້າ ແລະ ຮຽບຮຽງເນື້ອໃນຂອງກົດໝາຍວ່າດ້ວຍການກວດສອບອິດສະຫຼະ (ສະບັບປັບປຸງ) ຕາມການປະກອບຄຳເຫັນຂອງບັນດາທ່ານສະມາຊິກສະພາແຫ່ງຊາດ ໃນຄັ້ງວັນທີ 10-11 ທັນວາຜ່ານມາ ເຊິ່ງມີ ສສຊ ປະກອບຄຳເຫັນ 14 ທ່ານ ກວມເອົາ 22 ມາດຕາ, 30 ເນື້ອໃນ; ບັນດາຄຳເຫັນເຫຼົ່ານັ້ນ ຄະນະຮັບຜິດຊອບກໍໄດ້ຄົ້ນຄວ້າພິຈາລະນາປັບປຸງໃນເບື້ອງຕົ້ນ ໃນນີ້ໄດ້ປັບປຸງ 5 ມາດຕາ, ບໍ່ໄດ້ປັບປຸງ 17 ມາດຕາ ເຊິ່ງໄດ້ລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີ IX ໃນວັນທີ 11 ທັນວາ 2024 ແລະ ບັນດາທ່ານ ສສຊ ກໍໄດ້ລົງຄະແນນສຽງຮັບຮອງເອົາດ້ວຍຄະແນນສຽງສ່ວນຫຼາຍ.

ຜູ້ເຂົ້າຮ່ວມໄດ້ສຸມສະຕິປັນຍາຄົ້ນຄວ້າ, ສົນທະນາແລກປ່ຽນແຕ່ລະບັນຫາທີ່ ສສຊ ຕັ້ງຂຶ້ນ ແລະ ບັນຫາອື່ນໆ ຢ່າງເລິກເຊິ່ງ ແລະ ຮອບດ້ານ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກມູນນິທິເອເຊຍ (The Asia Foundation) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ.

**(ສອນສັກ ວັນວິໄຊ)**

# ກອງປະຊຸມໃຫຍ່ຄັ້ງທີ II ກຳມະບານຮາກຖານ ກວທສ



(ສພຊ) - ກອງປະຊຸມໃຫຍ່ຄັ້ງທີ II ຂອງກຳມະບານຮາກຖານກຳມາທິການວັດທະນະທຳ-ສັງຄົມ (ກວທສ) ໄດ້ຈັດຂຶ້ນຕອນບ່າຍວັນທີ 17 ທັນວາຜ່ານມາ ໂດຍການເປັນປະທານຂອງສະຫາຍ ບຸນສະຫວັນ ໄຊຍະວົງ ປະທານກຳມະບານຮາກຖານ ກວທສ; ມີສະຫາຍ ດຣ. ບຸນລ້ອມແກ້ວບົວໂຮມຮອງເລຂາໜ່ວຍພັກຮາກຖານກວທສ, ສະຫາຍ ອຳໄພ ຈິດມານົບ ປະທານຄະນະບໍລິຫານງານສະຫະພັນກຳມະບານສະພາແຫ່ງຊາດ (ສພຊ) ແລະ ຕາງໜ້າກຳມະບານຮາກຖານພາຍໃນ ສພຊ ເຂົ້າຮ່ວມທັງໝົດ 25 ສະຫາຍ, ຍິງ 7 ສະຫາຍ.

ກອງປະຊຸມໄດ້ເຫັນດີເປັນເອກະພາບພິຈາລະນາແລະຮັບຮອງເອົາບົດລາຍງານການເມືອງຂອງກຳມະບານຮາກຖານກຳມາທິການວັດທະນະທຳ-ສັງຄົມ ເຊິ່ງປະກອບມີ 2 ພາກຄື: ພາກທີ 1 ຕີລາຄາສະພາບການເຄື່ອນໄຫວວຽກງານຂອງກຳມະບານຮາກຖານ ໃນໄລຍະ 5 ປີຜ່ານມາ(2020-2024), ພາກທີ 2 ທິດທາງແຜນການ 5 ປີ 2025-2029 ພ້ອມກັບການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ5ເປັນເຈົ້າ; ຮັບຟັງການຜ່ານບົດສໍາຫຼວດການນໍາພາຂອງຄະນະກໍາມະບານຮາກຖານກວທສກ່ຽວກັບການຊີ້ນຳ-ນຳພາຂອງຕົນຕໍ່ວຽກງານກຳມະບານຕະຫຼອດໄລຍະ 5 ປີຜ່ານມາ.

ຜູ້ແທນກອງປະຊຸມ 17 ສະຫາຍ, ຍິງ 5 ສະຫາຍ ໄດ້ປະຕິບັດຕາມຫຼັກການປະຊາທິປະໄຕ ໃຊ້ສິດຂອງຕົນປ່ອນບັດຄັດເລືອກເອົາຄະນະກຳມະບານຮາກຖານ ກວທສ ຊຸດທີ III ເຊິ່ງປະກອບດ້ວຍຜູ້ມີເງື່ອນໄຂຄົບຖ້ວນ 5 ສະຫາຍ, ຍິງ 1 ສະຫາຍ ຄື: ສະຫາຍ ເອລາວັນ ພັນທະວົງ ເປັນປະທານ, ສະຫາຍ ໝອນເພັດ ສີສົມພອນ ເປັນຮອງປະທານ ທັງເປັນປະທານກວດກາ, ສະຫາຍວຽງສັກ ຈັນທະວົງເປັນຄະນະທັງເປັນຮອງປະທານກວດກາ, ສະຫາຍ ບຸນວິເສດ ພອນສະຫວັນ ແລະ ສະຫາຍ ນາງ ຄຳສະຫວັນພັນທະລາວົງເປັນຄະນະ.

ສະຫາຍ ດຣ. ບຸນລ້ອມ ແກ້ວບົວໂຮມ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນສຳເລັດການເຄື່ອນໄຫວຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງກຳມະບານຮາກຖານກຳມາທິການວັດທະນະທຳ-ສັງຄົມ ທີ່ສາມາດຍາດມາໄດ້ໃນໄລຍະ 5 ປີຜ່ານມາ ແລະ ເນັ້ນໜັກໃຫ້ຄະນະກຳມະບານຮາກຖານຊຸດໃໝ່ ເພີ່ມທະວີເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດ, ຄຸນທາດການເມືອງ, ຄຸນສົມບັດສົມທຳປະຕິວັດ, ມີນ້ຳໃຈຮັກຊາດ, ຮັກລະບອບປະຊາທິປະໄຕ, ເປັນແບບຢ່າງທີ່ດີໃນການເຄື່ອນໄຫວວຽກງານ ແລະ ການດຳລົງຊີວິດ; ສືບຕໍ່ກໍ່ສ້າງ, ສ່ອງແສງ, ຕຳນິສິ່ງຂ່າວ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງສະມາຊິກກຳມະບານ, ສາມາດເປັນພະນັກງານສືບທອດປ່ຽນແທນໄດ້ໃນຕໍ່ໜ້າ ພ້ອມທັງເອົາໃຈໃສ່ຍົກສູງຄວາມຮູ້ແລະຄວາມສາມາດທາງດ້ານວິຊາສະເພາະ, ການນຳໃຊ້ເຕັກໂນໂລຊີໃໝ່ ເພື່ອໝູນໃຊ້ເຂົ້າໃນການປະຕິບັດໜ້າທີ່ວຽກງານຕົວຈິງໃຫ້ຫຼາຍຂຶ້ນກວ່າເກົ່າ; ຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 5ເປັນເຈົ້າຂອງກຳມະບານຮາກຖານ ດ້ວຍຄວາມຮັບຜິດຊອບ ແລະ ໃຫ້ມີຜົນສຳເລັດໃນແຕ່ລະດ້ານແຕ່ລະໄລຍະ; ເຕົ້າໂຮມຄວາມສາມັກຄີພາຍໃນ, ຊຸກຍູ້ ແລະ ຊ່ວຍເຫຼືອເຊິ່ງກັນແລະກັນໃນຍາມຫຍຸ້ງຍາກ ແລະ ປະກອບສ່ວນເຂົ້າຮ່ວມກິດຈະກຳ/ຂະບວນການລວມຂອງສະຫະພັນກຳມະບານສະພາແຫ່ງຊາດ ໃຫ້ເປັນປົກກະຕິ.

**(ນາງ ກຸກກິກ ບຸດດາໄຊ)**

# ຍົກລະດັບພະນັກງານ ກບຜ ປະຈຳປີ 2024



(ສພຊ) - ກຳມາທິການບັນດາເຜົ່າ (ກບຜ) ໄດ້ຈັດກອງປະຊຸມເຝິກອົບຮົມຍົກຂີດຄວາມສາມາດ ປະຈຳປີ 2024 ໃຫ້ແກ່ພະນັກງານພາຍໃນກຳມາທິການ ໃນວັນທີ 25-26 ທັນວານີ້ ທີ່ເມືອງແກ້ວອຸດົມແຂວງວຽງຈັນ ໂດຍການເປັນປະທານຂອງທ່ານນາງທັດສະດາພອນ ຈັນທະມາດ ຮອງປະທານກຳມາທິການບັນດາເຜົ່າ ເຊິ່ງມີທ່ານຮອງປະທານ ກບຜ, ແຂກຖືກເຊີນຈາກພາຍໃນສະພາແຫ່ງຊາດ(ສພຊ), ສູນກາງແນວລາວສ້າງຊາດ ແລະ ກະຊວງພາຍໃນເຂົ້າຮ່ວມ44ທ່ານ.

ທ່ານນາງທັດສະດາພອນ ຈັນທະມາດ ກ່າວວ່າ: ກອງປະຊຸມຄັ້ງນີ້ ເປັນການຍົກສູງຂີດຄວາມສາມາດ, ເພີ່ມທັກສະໃນການປະຕິບັດໜ້າທີ່ວຽກງານ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງພະນັກງານ ເພື່ອຮັບປະກັນການເປັນເສນາທິການທີ່ດີໃຫ້ແກ່ພະແນກ, ກົມ ກໍຄືກຳມາທິການ ໃຫ້ມີຄວາມເຂັ້ມແຂງຂຶ້ນເທື່ອລະກ້າວ ພ້ອມທັງເຊື່ອມຊຶມບັນດານິຕິກຳທີ່ກ່ຽວຂ້ອງໃນຂົງເຂດວຽກງານຂອງກຳມາທິການບັນດາເຜົ່າ, ກະຊວງພາຍໃນ, ສູນກາງແນວລາວສ້າງຊາດ ເພື່ອນຳໄປຈັດຕັ້ງຜັນຂະຫຍາຍເຂົ້າໃນໜ້າທີ່ວຽກງານທີ່ຕົນຮັບຜິດຊອບ.

ກອງປະຊຸມໄດ້ຮັບຟັງການເຜີຍແຜ່ເນື້ອໃນມະຕິກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX ກ່ຽວກັບວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ, (ຮ່າງ) ມະຕິກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ຊຸດທີ IX ກ່ຽວກັບວຽກງານ 3 ສ້າງ, ເຜີຍແຜ່ເນື້ອໃນ (ຮ່າງ) ປຶ້ມ 50 ຊົນເຜົ່າໃນວົງຄະນາຍາດແຫ່ງສປປລາວ, ເນື້ອໃນວຽກງານແນວໂຮມ ແລະ ວຽກງານຊຸ້ມຄົນ-ສັງຄົມ, ບົດຮຽນການແຍກໂຄງປະກອບການຈັດຕັ້ງ (ແຍກພະແນກ), ບາງເນື້ອໃນການກຳນົດຕຳແໜ່ງງານຂອງຂັ້ນພະແນກ, ບາງເນື້ອໃນຂອງດຳລັດວ່າດ້ວຍອົງການຈັດຕັ້ງສັງຄົມໃນໄລຍະຜ່ານມາ ຍົກໃຫ້ເຫັນດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ ແລະ ວິທີການແກ້ໄຂ.

ຜູ້ເຂົ້າຮ່ວມໄດ້ຄົ້ນຄວ້າ ແລະ ແລກປ່ຽນຄຳຄິດຄຳເຫັນຢ່າງກົງໄປກົງມາ ໂດຍສຸມໃສ່ຈຸດປະສົງທີ່ບັນດາວິທະຍາກອນໄດ້ຍົກຂຶ້ນ ໃຫ້ໄດ້ຮັບປະສິດທິພາບ ແລະ ປະສິດທິຜົນສູງສຸດ.

**(ສອນສັກ ວັນວິໄຊ)**

# ເປີດຊຸດຮຽນພາສາຫວຽດນາມ ໃຫ້ພະນັກງານສະພາແຫ່ງຊາດລາວ



(ສພຊ) - ຕອນເຊົ້າວັນພຸດທີ 4 ທັນວາຜ່ານມາ ທີ່ນະຄອນຫຼວງຮ່າໂນ້ຍ, ຫ້ອງວ່າການສະພາແຫ່ງຊາດຫວຽດນາມແລະມະຫາວິທະຍາໄລຮ່າໂນ້ຍໄດ້ຈັດພິທີເປີດຊຸດຮຽນພາສາຫວຽດນາມໄລຍະສັ້ນ ໃຫ້ແກ່ພະນັກງານສະພາແຫ່ງຊາດລາວ ຈຳນວນ 12 ສະຫາຍ, ຍິງ 6 ສະຫາຍ ເຊິ່ງເປັນໜຶ່ງໃນບັນດາການເຄື່ອນໄຫວປະຕິບັດຕາມຂໍ້ຕົກລົງການຮ່ວມມືລະຫວ່າງຫ້ອງວ່າການສະພາແຫ່ງຊາດຫວຽດນາມ ແລະ ຄະນະເລຂາທິການສະພາແຫ່ງຊາດລາວ.

ສະຫາຍ ຫງວຽນ ແໝ້ງຮຸ່ງ (Nguyễn Mạnh Hùng) ຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດຫວຽດນາມ ກ່າວຄຳເຫັນໃນພິທີເປີດຊຸດຮຽນວ່າ: ໃນຊຸມປີມໍ່ໆມານີ້, ການຮ່ວມມືຫວຽດນາມ-ລາວ ໃນທຸກຂົງເຂດໄດ້ຮັບການເພີ່ມທະວີຂຶ້ນສູ່ລະດັບສູງໃໝ່ຢ່າງຕໍ່ເນື່ອງ; ຫ້ອງວ່າການສະພາແຫ່ງຊາດຫວຽດນາມ ແລະ ຄະນະເລຂາທິການສະພາແຫ່ງຊາດລາວ ໄດ້ມີການເຄື່ອນໄຫວຮ່ວມມືກັນຫຼາຍຢ່າງ, ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການຊຸກຍູ້ການພົວພັນຕ່າງປະເທດລະຫວ່າງສະພາແຫ່ງຊາດສອງປະເທດ. ສະຫາຍເນັ້ນໜັກວ່າ ພາສາແມ່ນ "ກຸນແຈ" ໃນການຕິດຕໍ່ພົວພັນ, ແລກປ່ຽນລະຫວ່າງປະຊາຊົນ; ເຊື່ອໝັ້ນວ່າຜ່ານຫຼັກສູດພາສາຫວຽດນາມ, ພະນັກງານຂອງຄະນະເລຂາທິການສະພາແຫ່ງຊາດລາວຈະຮັກແພງພາສາຫວຽດນາມ, ເຂົ້າໃຈວັດທະນະທຳຫວຽດນາມຫຼາຍຂຶ້ນກວ່າເກົ່າ ໂດຍສະເພາະໄດ້ປະກອບສ່ວນຢ່າງຕັ້ງໜ້າໃຫ້ແກ່ການປະຕິບັດບັນດາການເຄື່ອນໄຫວຮ່ວມມືລະຫວ່າງສອງອົງການເສນາທິການຊ່ວຍວຽກຂອງສະພາແຫ່ງຊາດ2ປະເທດ. ຫ້ອງວ່າການສະພາແຫ່ງຊາດຫວຽດນາມແລະບັນດາອາຈານມະຫາວິທະຍາໄລຮ່າໂນ້ຍ ພ້ອມແລ້ວທີ່ຈະສະໜັບສະໜູນ ແລະ ສ້າງສະພາບແວດລ້ອມດ້ານພາສາທີ່ດີທີ່ສຸດໃຫ້ແກ່ນັກສຶກສາ ເພື່ອບັນລຸເປົ້າໝາຍຂອງຫຼັກສູດ.

ສະຫາຍ ເລືອງ ຫງັອກມິງ (Lương Ngọc Minh) ຮອງອະທິການບໍດີມະຫາວິທະຍາໄລຮ່າໂນ້ຍໃຫ້ຮູ້ວ່າ: ຫຼັກສູດເຝິກອົບຮົມພາສາຫວຽດນາມໃຫ້ແກ່ພະນັກງານຄະນະເລຂາທິການສະພາແຫ່ງຊາດລາວ ໄດ້ຮັບການອອກແບບມາເປັນພິເສດ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການສະເພາະຂອງຜູ້ຮຽນ, ຊ່ວຍໃຫ້ນັກສຶກສາຫຼັງຈາກຮຽນຈົບຫຼັກສູດ ສາມາດນຳໃຊ້ໂຄງສ້າງພາສາທີ່ຫຼາກຫຼາຍໃນພາສາຫວຽດນາມໄດ້ຢ່າງຄ່ອງແຄ້ວ ເພື່ອແລກປ່ຽນ ແລະ ແບ່ງປັນຂໍ້ມູນຂ່າວສານ; ມະຫາວິທະຍາໄລຮ່າໂນ້ຍ ໃຫ້ຄຳໝັ້ນສັນຍາວ່າຈະສ້າງເງື່ອນໄຂທີ່ດີທີ່ສຸດທາງດ້ານອາຈານ, ສິ່ງອຳນວຍຄວາມສະດວກ, ບໍລິການສະໜັບສະໜູນນັກສຶກສາ ເພື່ອບັນລຸເປົ້າໝາຍຂອງຫຼັກສູດ.

ຫຼັກສູດດັ່ງກ່າວຈະເລີ່ມແຕ່ວັນນີ້ຈົນເຖິງເດືອນມິຖຸນາ 2025.

## ຖອດຖອນ...

(ຕໍ່ຈາກໜ້າ 1)

ລະບົດບາດ, ສິດ ແລະ ໜ້າທີ່ຂອງ ສພຊ ແລະ ສພຂ ເພື່ອຄົ້ນຄວ້າ ແລະ ສະເໜີທິດທາງການປັບປຸງໃນຕໍ່ໜ້າ.

ທ່ານ ສຸບັນ ສະວະບຸດ ກ່າວວ່າ: ຕະຫຼອດໄລຍະຜ່ານມາ ທັງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໄດ້ສຸມໃສ່ຈັດຕັ້ງປະຕິບັດວຽກງານຕາມແຜນການດ້ວຍຄວາມຮັບຜິດຊອບສູງ ຄຽງຄູ່ກັບການກໍ່ສ້າງ, ບຳລຸງສ້າງສະມາຊິກສະພາ ກໍຄືເສນາທິການເປັນປົກກະຕິຕໍ່ເນື່ອງດ້ວຍຮູບການ, ເນື້ອໃນຕ່າງໆ ໂດຍໄດ້ຮັບການຊ່ວຍເຫຼືອດ້ານທຶນຮອນ ແລະ ວິຊາການ ຈາກອົງການລັດແລະບັນດາອົງການຈັດຕັ້ງສາກົນ; ພ້ອມນັ້ນ, ກໍໄດ້ເອົາໃຈໃສ່ປັບປຸງກົງຈັກການຈັດຕັ້ງ, ແບບແຜນວິທີເຮັດວຽກ ເພື່ອເຮັດສຳເລັດໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ.

ກອງປະຊຸມໄດ້ຮັບຟັງການຖອດຖອນບົດຮຽນກ່ຽວກັບການຈັດຕັ້ງປະຕິບັດວຽກງານສ້າງຄວາມເຂັ້ມແຂງໃຫ້ແກ່ສສຊ ແລະ ສສຂ, ປະເມີນການປະຕິບັດພາລະບົດບາດຂອງ ສພຊ ແລະ ສພຂ ໃນໄລຍະຜ່ານມາ ແລະ ກຳນົດທິດທາງປັບປຸງໃນຕໍ່ໜ້າ, ການຄຸ້ມຄອງການສ້າງຄວາມເຂັ້ມແຂງໃຫ້ແກ່ ສພຊ ແລະ ສພຂ ຢ່າງມີຍຸດທະສາດ, ປະສົບການໃນການປະສານງານດ້ານວຽກງານຂອງບັນດາກຳມາທິການຂອງ ສພຊ ແລະ ສພຂ; ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ສຸມສະຕິປັນຍາເຂົ້າໃນການຄົ້ນຄວ້າ, ປະກອບຄຳເຫັນຢ່າງມີຈຸດສຸມ ແລະເລິກເຊິ່ງເພື່ອເປັນພື້ນຖານໃຫ້ກວສຊ ນຳໄປຄົ້ນຄວ້າແລະສະເໜີຄະນະປະຈຳສະພາແຫ່ງຊາດ ມີທິດຊີ້ນຳ ແນໃສ່ປັບປຸງຄຸນນະພາບ, ສ້າງຄວາມເຂັ້ມແຂງ ກໍຄືເຮັດໃຫ້ລະບົບກົງຈັກຂອງ ສພຊ, ສພຂ ໃນສະເພາະໜ້າ ແລະຍາວນານ ມີປະສິດທິພາບ, ປະສິດທິຜົນສູງຂຶ້ນເລື້ອຍໆ.

ວັນເສົາທີ 21 ທັນວາ, ກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ໄດ້ສືບຕໍ່ຈັດກອງປະຊຸມຄົບຄະນະ ເພື່ອສະຫຼຸບຕີລາຄາການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ກຳນົດທິດທາງແຜນການເຄື່ອນໄຫວປະຈຳປີ 2025; ປຶກສາຫາລື ແລະ ແລກປ່ຽນຄຳເຫັນບາງວຽກງານທີ່ຈຳເປັນຕາມພາລະບົດບາດ, ສິດແລະໜ້າທີ່ຂອງກຳມາທິການ.

ທ່ານ ຄຳໃບ ດຳລັດ ໄດ້ມີຄຳເຫັນໂອ້ລົມຕໍ່ທີ່ປະຊຸມ ໂດຍເນັ້ນໜັກໃຫ້ກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ພົວພັນປະສານສົມທົບກັບສະຖາບັນຄົ້ນຄວ້ານິຕິກຳ, ບັນດາກຳມາທິການ, ຄະນະເລຂາທິການ ແລະ ສະພາປະຊາຊົນຂັ້ນແຂວງ ໃນການຈັດກອງປະຊຸມເຝິກອົບຮົມ, ສຳມະນາ ໃຫ້ມີຄຸນນະພາບ, ມີປະສິດທິຜົນ; ຄົ້ນຄວ້າເບິ່ງຄືນການເຄື່ອນໄຫວວຽກງານຂອງ ສສຊ, ສສຂ ແລະ ບັນດາກົງຈັກພາຍໃນສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ເຫັນວ່າບັນຫາໃດທີ່ຍັງອ່ອນ, ຍັງຄົງຄ້າງ ທີ່ ສສຊ ແລະ ສສຂ ປະຕິບັດບໍ່ທັນໄດ້ຕາມເນື້ອໃນຈິດໃຈທີ່ກົດໝາຍ, ນິຕິກຳກ່ຽວຂ້ອງກຳນົດໄວ້ເພື່ອຈະໄດ້ສືບຕໍ່ເຝິກອົບຮົມ ຫຼື ສຳມະນາ, ກຳນົດເປັນຫົວຂໍ້, ກຳນົດເປົ້າໝາຍເຂົ້າເຝິກ ແລະ ສຳມະນາ, ເອົາຜູ້ເຝິກ (ວິທະຍາກອນ) ທີ່ມີຄວາມຮູ້, ປະສົບການດ້ານນັ້ນ ເປັນຜູ້ບັນລະຍາຍ; ເລືອກເຟັ້ນເອົາຜູ້ທີ່ມີຄວາມຮູ້, ມີຄວາມສາມາດຢູ່ແຕ່ລະຂົງເຂດມາເຝິກຢ່າງຈິງຈັງ ເພື່ອສາມາດເປັນວິທະຍາກອນໃນຕໍ່ໜ້າ.



## ຮຽບຮຽງ...

(ຕໍ່ຈາກໜ້າ 1)

ສຳນັກງານນາຍົກລັດຖະມົນຕີ ພ້ອມດ້ວຍຄະນະກົມ, ຄະນະພະແນກ ແລະ ພະນັກງານຈາກ ສພຊແລະພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມ 50 ກວ່າທ່ານ; ທັງນີ້, ກໍເພື່ອນຳເອົາຄຳເຫັນຂອງສະມາຊິກສະພາແຫ່ງຊາດ (ສສຊ) ທີ່ໄດ້ປະກອບໃສ່ຮ່າງກົດໝາຍສອງສະບັບນີ້ມາພິຈາລະນາ, ປັບປຸງໃສ່ເນື້ອໃນສອງຮ່າງກົດໝາຍ ໃຫ້ມີຄວາມຈະແຈ້ງ, ຄົບຖ້ວນ ແລະ ຮັດກຸມ.

ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ກ່າວວ່າ: ກອງປະຊຸມຄັ້ງນີ້ ຈະໄດ້ພິຈາລະນາຄືນບັນດາຄຳເຫັນຂອງສະມາຊິກສະພາແຫ່ງຊາດ ທີ່ຄະນະຮັບຜິດຊອບເຫັນດີ ຫຼື ບໍ່ປັບປຸງຕາມການສະເໜີ ແລະ ບັນຫາອື່ນທີ່ສະມາຊິກສະພາແຫ່ງຊາດບໍ່ໄດ້ຍົກຂຶ້ນ; ແຕ່ຫາກຍັງເຫັນວ່າເນື້ອໃນໃດຍັງບໍ່ສອດຄ່ອງ, ບໍ່ຄົບຖ້ວນ ຫຼືການຂຽນຍັງບໍ່ຖືກຕ້ອງກໍຈະໄດ້ປັບປຸງ ແລະ ຮຽບຮຽງຄືນ ເພື່ອຮັບປະກັນໃຫ້ເນື້ອໃນກົດໝາຍມີຄວາມຈະແຈ້ງ, ຮັດກຸມ ແລະສາມາດຈັດຕັ້ງປະຕິບັດໄດ້ ແລ້ວລາຍງານຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ເພື່ອນຳສະເໜີທ່ານປະທານສະພາແຫ່ງຊາດ ພິຈາລະນາລົງລາຍເຊັນໃນກົດໝາຍ 2 ສະບັບດັ່ງກ່າວ.

ຜູ້ເຂົ້າຮ່ວມໄດ້ສຸມສະຕິປັນຍາຄົ້ນຄວ້າ, ສົນທະນາແລກປ່ຽນ ແຕ່ລະບັນຫາທີ່ ສສຊ ຕັ້ງຂຶ້ນ ແລະ ບັນຫາອື່ນໆ ຢ່າງເລິກເຊິ່ງ ແລະ ຮອບດ້ານ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກມູນນິທິເອເຊຍ (The Asia Foundation) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ.

**(ນາງ ອານິຕາ ມ່ວນສະຫວັດ)**

# ກອງປະຊຸມໃຫຍ່ຄັ້ງທີ II ກຳມະບານຮາກຖານ ສນສ



(ສພຊ) - ກອງປະຊຸມໃຫຍ່ຄັ້ງທີ II ຂອງກຳມະບານຮາກຖານສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ (ສນສ) ໄດ້ຈັດຂຶ້ນເມື່ອວັນທີ 20 ທັນວາຜ່ານມາ ໂດຍການເປັນປະທານຂອງສະຫາຍ ບໍທານປະເສີດ ປະທານກຳມະບານຮາກຖານ ສນສ; ມີສະຫາຍ ສິນທະລາ ຫຼ້າສຸກສະໄໝ ເລຂາໜ່ວຍພັກຮາກຖານ ສນສ, ສະຫາຍ ໂພສີ ເຕັມເມລາດ ຕາງໜ້າຄະນະບໍລິຫານງານສະຫະພັນກຳມະບານສະພາແຫ່ງຊາດ (ສພຊ) ແລະ ຕາງໜ້າກຳມະບານຮາກຖານພາຍໃນ ສພຊ ເຂົ້າຮ່ວມທັງໝົດ 24 ສະຫາຍ, ຍິງ 7 ສະຫາຍ.

ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານການເມືອງຂອງກຳມະບານຮາກຖານ ສນສ ເຊິ່ງປະກອບມີ 2 ພາກຄື: ພາກທີ 1 ຕີລາຄາສະພາບການເຄື່ອນໄຫວໃນໄລຍະປີ 2019-2024 ເຊິ່ງຍົກໃຫ້ເຫັນດ້ານດີຜົນງານຕ່າງໆທີ່ກຳມະບານຮາກຖານຍາດມາໄດ້ພ້ອມດຽວກັນນັ້ນ, ກໍຍົກໃຫ້ເຫັນດ້ານຂໍ້ຄົງຄ້າງ ແລະ ບັນດາສາເຫດທີ່ຈະຕ້ອງໄດ້ປັບປຸງແກ້ໄຂ ເພື່ອຮັບປະກັນໃຫ້ການເຄື່ອນໄຫວຂອງກຳມະບານຮາກຖານດີຂຶ້ນ; ພາກທີ 2 ກຳນົດທິດທາງການເຄື່ອນໄຫວວຽກງານໃນໄລຍະ 5 ປີ (2025-2029) ຕົ້ນຕໍແມ່ນການເພີ່ມທະວີສຶກສາອົບຮົມການເມືອງ-ແນວຄິດ, ການພັດທະນາວຽກງານກຳມະບານ ຕິດພັນກັບການເປັນເສນາທິການໃຫ້ແກ່ໜ່ວຍພັກຮາກຖານ ໄປພ້ອມໆກັບການຈັດຕັ້ງປະຕິບັດເນື້ອໃນຂໍ້ແຂ່ງຂັນ 5 ເປັນເຈົ້າ. ນອກນີ້, ຍັງໄດ້ຮັບຟັງການຜ່ານບົດສຳຫຼວດຂອງຄະນະກຳມະບານຮາກຖານ ກ່ຽວກັບການຊີ້ນຳ-ນຳພາຕໍ່ວຽກງານກຳມະບານ ຕະຫຼອດ 5 ປີຜ່ານມາ ເຊິ່ງກໍມີດ້ານດີ, ຜົນງານ, ຂໍ້ຄົງຄ້າງ ແລະ ບົດຮຽນຖອດຖອນໄດ້ຈຳນວນໜຶ່ງ ທີ່ຄະນະກຳມະບານຮາກຖານຊຸດໃໝ່ຈະຕ້ອງນຳໄປເປັນບົດຮຽນແລະສືບຕໍ່ປັບປຸງແກ້ໄຂ ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງນີ້ບັນລຸຕາມຄາດໝາຍທີ່ວາງໄວ້.

ຜູ້ແທນກອງປະຊຸມ 18 ສະຫາຍ, ຍິງ 9 ສະຫາຍ ໄດ້ປ່ອນບັດຄັດເລືອກເອົາຄະນະກຳມະບານຮາກຖານ ສນສ ຊຸດໃໝ່ ເຊິ່ງປະກອບມີ 5 ສະຫາຍ, ຍິງ 2 ສະຫາຍ ຄື: ສະ ຫາຍ ລົງທ່າວ ຕົງປາວທໍ່ເປັນປະທານ, ສະຫາຍ ນາງ ພູວະລີ ພູນສະຫວັນ ເປັນຮອງປະທານ ທັງເປັນປະທານກວດກາ, ສະຫາຍ ຈິດຕະກອນ ໄຊຍະສິດເປັນຮອງປະທານ, ສະຫາຍ ນາງ ພຸດສະຫວັນ ວົງນະລາດ ແລະ ສະຫາຍ ບຸນໜາ ອິນທະວົງ ເປັນຄະນະ.

ສະຫາຍ ສິນທະລາ ຫຼ້າສຸກສະໄໝ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນສຳເລັດການເຄື່ອນໄຫວຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງກຳມະບານຮາກຖານ ສນສ ທີ່ສາມາດຍາດມາໄດ້ໃນໄລຍະ 5 ປີຜ່ານມາ ແລະ ເນັ້ນໜັກໃຫ້ເພີ່ມທະວີການຈັດຕັ້ງປະຕິບັດພາລະບົດບາດກຳມະບານໃຫ້ສອດຄ່ອງກົມກຽວກັບສິດ, ໜ້າທີ່ຂອງຕົນ; ເອົາໃຈໃສ່ຈັດຕັ້ງປະຕິບັດເນື້ອໃນຂໍ້ແຂ່ງຂັນ 5 ເປັນເຈົ້າຂອງກຳມະບານ ໄປຄວບຄູ່ກັບການປະຕິບັດເນື້ອໃນຂໍ້ແຂ່ງຂັນຮັກຊາດແລະພັດທະນາ. ນອກນັ້ນ, ຍັງຮຽກຮ້ອງໜ່ວຍພັກຮາກຖານ ໃຫ້ການຊ່ວຍເຫຼືອອົງການຈັດຕັ້ງກຳມະບານຕື່ມນັບທັງການສຶກສາອົບຮົມການເມືອງ-ແນວຄິດ ເພື່ອໃຫ້ອົງການຈັດຕັ້ງກຳມະບານເຄື່ອນໄຫວມີປະສິດທິຜົນສູງຂຶ້ນກວ່າເກົ່າ.

**(ສອນສັກ ວັນວິໄຊ)**

## ພິທີ...

(ຕໍ່ຈາກໜ້າ 1)

ຕິພາບແລະສາມັກຄີຂອງລາວ, ຕາງໜ້າກ່າວມອບໂດຍສະຫາຍ ນາງ ຫຼິນ ຢວນ (Lin yuan) ຕາງໜ້າມູນນິທິຈີນເພື່ອພັດທະນາຊົນນະບົດ ເຊິ່ງມີຕາງໜ້າຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທົ່ວປະເທດ, ຄະນະບໍລິຫານງານຄະນະສັນຕິພາບແລະສາມັກຄີຂອງລາວ, ພະນັກງານຈາກຄະນະພົວພັນຕ່າງປະເທດສູນກາງພັກ, ກະຊວງສຶກສາທິການ ແລະ ກິລາ, ພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງວຽງຈັນ, ຄູອາຈານ ແລະ ນັກຮຽນມາຈາກບັນດາໂຮງຮຽນປະຖົມສົມບູນແລະໂຮງຮຽນມັດທະຍົມສົມບູນຂອງນະຄອນຫຼວງວຽງຈັນ ເຂົ້າຮ່ວມເປັນສັກຂີພະຍານ 150 ກວ່າຄົນ.

ສະຫາຍ ສົມມາດ ພົລເສນາ ໄດ້ສະແດງຄວາມຂອບໃຈຢ່າງຍິ່ງໄປຍັງພັກ, ລັດ ແລະ ປະຊາຊົນຈີນ ໂດຍສະເພາະແມ່ນມູນນິທິຈີນເພື່ອພັດທະນາຊົນນະບົດ ພ້ອມດ້ວຍບັນດາບໍລິສັດ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງຂອງສປຈີນທີ່ໃຫ້ການສະໜັບສະໜູນໃນຄັ້ງນີ້ ທັງໃຫ້ຄຳໝັ້ນສັນຍາວ່າຈະນຳເອົາລົດຖີບຈຳນວນດັ່ງກ່າວ ມອບຜ່ານສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ໄປແຈກຢາຍໃຫ້ທົ່ວເຖິງນ້ອງນັກຮຽນທີ່ດ້ອຍໂອກາດຢູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກໃນນະຄອນຫຼວງວຽງຈັນແລະ 17 ແຂວງທົ່ວປະເທດ ເພື່ອໃຫ້ກຳລັງໃຈ ແລະ ເປັນພາຫະນະອຳນວຍຄວາມສະດວກໃນການໄປໂຮງຮຽນຂອງນ້ອງໆນັກຮຽນ; ສະຫາຍຍັງກ່າວຕື່ມວ່າ: ໃນອະນາຄົດ ຈະສືບຕໍ່ລົງເລິກການຮ່ວມມື ແລະ ແລກປ່ຽນຖອດຖອນບົດຮຽນນຳ ສປຈີນ ໂດຍສະເພາະແມ່ນການພັດທະນາການສຶກສາຢູ່ເຂດຊົນນະບົດ ແລະ ການແກ້ໄຂຄວາມທຸກຍາກ.

ຕາງໜ້າກອງທຶນຈີນເພື່ອພັດທະນາຊົນນະບົດ ໄດ້ສະແດງເຈດຈຳນົງທີ່ຈະສືບຕໍ່ຊ່ວຍເຫຼືອອຸປະກອນການສຶກສາໃຫ້ແກ່ນັກຮຽນລາວໃນຕໍ່ໜ້າ ໂດຍສະເພາະແມ່ນລົດຖີບ, ຖົງປຶ້ມ, ບໍ່ນ້ຳສະອາດ ແລະ ຈະສົ່ງອາສາສະໝັກດ້ານກະສິກຳ ເພື່ອມາຊ່ວຍເຫຼືອປະຊາຊົນລາວ.

**(ນາງ ອາລິນ ສຸພົມມະປະດິດ)**

# ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ສປນວ ຊຸດທີ II




(ສພຊ) - ພາຍຫຼັງທີ່ດຳເນີນມາເປັນເວລາ 6 ວັນເຄິ່ງ, ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ (ສປນວ) ຊຸດທີ II ໄດ້ປິດລົງຢ່າງເປັນທາງການໃນວັນທີ 24 ທັນວານີ້ ໂດຍການເປັນປະທານຂອງທ່ານ ນາງ ລຳພອຍ ສີອັກຄະຈັນ ຮອງປະທານສະພາປະຊາຊົນນະຄອນຫຼວງວຽງຈັນ; ເຂົ້າຮ່ວມມີທ່ານ ອາດສະພັງທອງ ສີພັນດອນເຈົ້າຄອງນະຄອນຫຼວງວຽງຈັນ, ບັນດາການນຳພັກ-ລັດຂັ້ນ ນວ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 1, ສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ ແລະ ແຂກຖືກເຊີນ.

ກອງປະຊຸມໄດ້ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນຂອງນະຄອນຫຼວງວຽງຈັນຄື: 1. ບົດລາຍງານຂອງອົງການປົກຄອງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານປະຈຳປີ 2024 ແລະ ທິດທາງແຜນການປະຈຳປີ 2025, ແຜນການລົງທຶນຂອງລັດປະຈຳປີ 2025, ແຜນຄາດຄະເນການນຳໃຊ້ເງິນເກີນແຜນປະຈຳປີ 2024 ແລະຕິດພັນກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ; 2. ບົດລາຍງານການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດແລະແກ້ໄຂຄວາມທຸກຍາກປະຈຳປີ 2024 ແລະ ທິດທາງແຜນການປະຈຳປີ 2025; 3. ບົດລາຍງານການຈັດຕັ້ງປະຕິບັດວຽກງານປະຈຳປີ 2024 ແລະ ທິດທາງແຜນການປະຈຳປີ 2025, ບົດລາຍງານຜົນຂອງການກວດສອບຄືນ ແລະ ການສະຫຼຸບງົບປະມານຂາດຕົວປະຈຳປີ 2023 ຂອງອົງການກວດສອບປະຈຳພາກກາງ 1; 4. ບົດລາຍງານການຈັດຕັ້ງປະຕິບັດວຽກງານກວດກາປະຈຳປີ 2024 ແລະ ທິດທາງແຜນການປີ 2025 ຂອງອົງການກວດກາລັດ ນວ; 5. ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ທິດທາງແຜນການປະຈຳປີ 2025 ຂອງອົງການໄອຍະການປະຊາຊົນພາກກາງ, ອົງການໄອຍະການປະຊາຊົນ ນວ, ສານປະຊາຊົນພາກກາງ, ສານປະຊາຊົນ ນວ ແລະ ກອງປະຕິບັດຄຳຕັດສິນຂອງສານ ນວ; 6. ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ທິດທາງແຜນການປະຈຳປີ 2025 ຂອງ ສປນວ ຊຸດທີ II; 7. ຮ່າງມະຕິກອງປະຊຸມສະພາປະຊາຊົນວ່າດ້ວຍການດຳເນີນກອງປະຊຸມຂອງສະພາປະຊາຊົນ ແລະ ການລົງພົບປະຜູ້ມີສິດເລືອກຕັ້ງ; 8. ຮ່າງຂໍ້ຕົກລົງວ່າດ້ວຍກອງທຶນຄຸ້ມຄອງໄພພິບັດນະຄອນຫຼວງວຽງຈັນ.

ກອງປະຊຸມຍັງໄດ້ຮັບຟັງ: 1. ການປະກອບຄຳເຫັນຂອງອົງການແນວລາວສ້າງຊາດນະຄອນຫຼວງວຽງຈັນກ່ຽວກັບການເຄື່ອນໄຫວວຽກງານຂອງສະພາປະຊາຊົນ. 2. ບົດລາຍງານການປະເມີນຜົນການຈັດຕັ້ງປະຕິບັດບັນດານິຕິກຳໃຕ້ກົດໝາຍທີ່ສະພາປະຊາຊົນໄດ້ຮັບຮອງ 2 ສະບັບຄື: ຂໍ້ຕົກລົງຂອງທ່ານເຈົ້າຄອງນະຄອນຫຼວງວຽງຈັນ ວ່າດ້ວຍການປະເມີນລາຄາທີ່ດິນທົ່ວນະຄອນຫຼວງວຽງຈັນ ສະບັບເລກທີ 142/ຈນວ, ລົງວັນທີ 26 ກຸມພາ 2021; ຂໍ້ຕົກລົງຂອງທ່ານເຈົ້າຄອງນະຄອນຫຼວງວຽງຈັນ ວ່າດ້ວຍການພັດທະນາ ແລະ ຄຸ້ມຄອງເຂດສະຫງວນຄອງນ້ຳວຽງຈັນ, ສະບັບເລກທີ 0966/ຈນວ, ລົງວັນທີ 11 ພະຈິກ 2019. 3. ການລາຍງານ, ຊີ້ແຈງບັນຫາສຳຄັນຕ່າງໆຂອງນະຄອນຫຼວງ ເປັນຕົ້ນ: 1) ການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ທີ່ຕິດພັນກັບການກຳນົດແຜນວຽກຈຸດສຸມ, ບຸລິມະສິດ ເພື່ອຈັດຕັ້ງວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານຂອງທ້າຍສະໄໝຮອດປີ 2025; 2) ມາດຕະການຄຸ້ມຄອງ ແລະ ຕ້ານການຮົ່ວໄຫຼຂອງລາຍຮັບງົບປະມານແຫ່ງລັດ ແລະ ແຜນການຈັດສັນເງິນເກີນແຜນປີ 2024; 3) ການປະຕິບັດມາດຕະການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ ໃຫ້ແກ່ພະນັກງານລັດ, ທະຫານ, ຕຳຫຼວດ; 4) ການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ກ່ຽວກັບການສົ່ງເສີມການຜະລິດສິນຄ້າພາຍໃນ, ການກຳນົດໂຄງປະກອບລາຄາສິນຄ້າ ແລະ ການເຂົ້າຫາແຫຼ່ງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ-ຂະໜາດກາງ; 5) ການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ; 6) ການຄຸ້ມຄອງການນຳເຂົ້າສິນຄ້າທີ່ມີສານຕັ້ງຕົ້ນປະເພດຢາເສບຕິດ ເປັນຕົ້ນ: ຢາສູບໄຟຟ້າ, ກາເຟປາຕີ້ຄໍລາເຈນ, ປຸ່ມເປົ້າ ແລະ ອື່ນໆ; 7) ການຈັດຕັ້ງປະຕິບັດໂຄງການຂົນສົ່ງແບບຍືນຍົງໃນຕົວເມືອງ (ລົດເມດ່ວນ BRT); ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍຜັງເມືອງ ແລະ ແຜນຜັງເມືອງສະບັບທີ III ຂອງ ນວ ໄປຄຽງຄູ່ກັບການຈັດສັນຄວາມບໍ່ເປັນລະບຽບຮຽບຮ້ອຍໃນສັງຄົມ; 9) ການຈັດຕັ້ງປະຕິບັດໂຄງການກໍ່ສ້າງຂະຫຍາຍນ້ຳປະປາຈີນາຍໂມ້ ແລະ ທໍ່ສົ່ງນະຄອນຫຼວງ ທີ່ນຳໃຊ້ເງິນກູ້ຢືມຈາກລັດຖະບານຍີ່ປຸ່ນ; 10) ມາດຕະການໃນການຄຸ້ມຄອງການຂຸດຄົ້ນແຮ່ທາດຢູ່ ນວ ຕິດພັນກັບການນຳໃຊ້ງົບປະມານພັດທະນາທ້ອງຖິ່ນແລະພັດທະນາຊຸມຊົນ; 11) ສະພາບການສຶກສາໃນ ນວ ທີ່ຕິດພັນກັບການປະລະການຮຽນຂອງນັກຮຽນຊັ້ນມຕົ້ນ ແລະ ມປາຍ ປະຈຳສົກປີ 2023 -2024 ແລະ ທິດທາງແຜນການປະຈຳສົກປີ 2024-2025; 12) ວິທີການ ຫຼື ມາດຕະການແກ້ໄຂໃຫ້ຖືກຕ້ອງຕາມກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານໂດຍສະເພາະແມ່ນຄຳຕັດສິນຂອງສານທີ່ຄ້າງປະຕິບັດຫຼາຍປີ; ວິທີການແກ້ໄຂກໍລະນີຜູ້ຖືກປະຕິບັດຄຳຕັດສິນຂອງສານ ໄດ້ເອົາຕົວຫຼົບຫຼີກ ຫຼື ຫຼົບໜີ ເພື່ອໃຫ້ຄຳຕັດສິນຂອງສານໄດ້ຮັບການປະຕິບັດຖືກຕ້ອງ, ຄົບຖ້ວນ, ທົ່ວເຖິງ ແລະ ທັນເວລາ; 13) ການຕິດຕາມກວດກາການດຳເນີນຄະດີຂອງອົງການສືບສວນ-ສອບສວນຂັ້ນສູນ ກາງໃນໄລຍະຜ່ານມາໄດ້ຈັດຕັ້ງປະຕິບັດແນວໃດ, ມີຄວາມສະດວກແລະຄວາມຫຍຸ້ງຍາກແນວໃດ?; 14) ກົນໄກການປະສານງານລະຫວ່າງສານປະຊາຊົນກັບຄ້າຍຄຸມຂັງ-ດັດສ້າງ ກ່ຽວກັບການຈັດຕັ້ງສານເຄື່ອນທີ່, ການເອົາຜູ້ຖືກຫາມາຕັດສິນຢູ່ສານ ແລະ ການສົ່ງປະເດັນ ຫຼື ຄຳຕັດສິນໃຫ້ຄ້າຍຄຸມຂັງ-ດັດສ້າງ ເພື່ອຮັບປະກັນໃຫ້ມີຄວາມກົມກຽວຕາມຂັ້ນຕອນຂອງກົດໝາຍ. ນອກນັ້ນ, ຍັງຮັບຟັງການຊີ້ແຈງບາງບັນຫາສຳຄັນຈາກອົງການປົກຄອງ, ສານປະຊາຊົນ, ອົງການໄອຍະການປະຊາຊົນແລະພາກສ່ວນທີ່ກ່ຽວຂ້ອງ ແລະ ມອບໃຫ້ບາງພະແນກການລາຍງານຊີ້ແຈງເປັນລາຍລັກອັກສອນຕື່ມອີກ.

**(ນາງ ອາລິນ ສຸພົມມະປະດິດ)**

# ສພຂ ຫຼວງນ້ຳທາ ຕິດຕາມກວດກາວຽກງານ ຂົງເຂດວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ



(ສພຂ)-ວັນທີ28-29 ພະຈິກ 2024 ທີ່ຫ້ອງປະຊຸມເມືອງວຽງພູຄາ, ຄະນະກຳມະການວັດທະນະທຳ-ສັງຄົມແລະບັນດາເຜົ່າຂອງສະພາປະຊາຊົນແຂວງ (ສພຂ) ຫຼວງນ້ຳທາ ໄດ້ຈັດກອງປະຊຸມເພື່ອຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານພັດທະນາຊັບພະຍາກອນມະນຸດຂອງແຂວງ ໂດຍການເປັນປະທານຂອງທ່ານ ນາງ ອຸ່ນຫຼ້າ ອ້ຽງລໍລາດ ຮອງປະທານ ສພຂ ຜູ້ຊີ້ນຳວຽກງານຂົງເຂດວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ; ເຂົ້າຮ່ວມມີບັນດາທ່ານສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ, ຫົວໜ້າ ແລະ ຮອງຫົວໜ້າພະແນກການຂົງເຂດວັດທະນະທຳ-ສັງຄົມຂອງແຂວງ, ຫົວໜ້າ ແລະ ຮອງຫົວໜ້າຫ້ອງການທີ່ກ່ຽວຂ້ອງຂອງເມືອງ.

ການລົງຕິດຕາມກວດກາຄັ້ງນີ້ ໄດ້ຮັບຟັງການລາຍງານກ່ຽວກັບແຜນພັດທະນາຊັບພະຍາກອນມະນຸດ 5 ປີຄັ້ງທີ IX (2021-2025) ແລະ ການພັດທະນາຄວາມຮູ້ພື້ນຖານດ້ານການສຶກສາ ແລະ ທັກສະວິຊາຊີບ ຈາກພະແນກສຶກສາທິການ ແລະ ກິລາແຂວງ, ການກໍ່ສ້າງ ແລະ ຄຸ້ມຄອງພະນັກງານ-ລັດຖະກອນຂອງແຂວງ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ຈາກຄະນະຈັດຕັ້ງແຂວງ, ການອະນຸຮັກ ແລະ ສົ່ງເສີມຄຸນຄ່າອັນດີງາມຂອງຊາດໃຫ້ທົ່ວປວງຊົນ ຈາກພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ, ການພັດທະນາແຮງງານ ແລະ ເພີ່ມຜະລິດຕະພາບແຮງງານເພື່ອຕອບສະໜອງຄວາມຕ້ອງການຂອງຕະຫຼາດແຮງງານແຕ່ລະໄລຍະ ຈາກພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ, ການປະຕິບັດບົດບາດການຕິດຕາມກວດກາຂອງ ສພຂ ກ່ຽວກັບວຽກງານພັດທະນາຊັບພະຍາກອນມະນຸດພາຍໃນເມືອງ; ພ້ອມດຽວກັນ, ຍັງໄດ້ຮັບຟັງການລາຍງານຕາມຄຳຖາມເຈາະຈີ້ມຂອງຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ. ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມໄດ້ແລກປ່ຽນ ແລະ ປະກອບຄຳຄິດເຫັນຕໍ່ວຽກງານຂົງເຂດຂອງຕົນຢ່າງມີຈຸດສຸມ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານພາຍໃນແຂວງ, ເມືອງ ມີຄຸນນະພາບ, ຖືກຕ້ອງຕາມກົດໝາຍ ແລະ ມີຜົນສຳເລັດຕາມລະດັບຄາດໝາຍ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌ (STEPS).

# ຮອງປະທານ ສພຂ ຫົວພັນ ເຄື່ອນໄຫວວຽກງານຢູ່ 4 ເມືອງ



(ສພຂ) - ວັນທີ 25-28 ພະຈິກ 2024 ຄະນະປະຈຳສະພາປະຊາຊົນແຂວງ (ສພຂ) ຫົວພັນ ນຳໂດຍທ່ານ ສົມສັກ ດອນຈານິດ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງ ໄດ້ລົງຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ມະຕິກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສພຂ ຫົວພັນ ຊຸດທີ II ຢູ່ເມືອງວຽງໄຊ, ເມືອງສົບເບົາ, ເມືອງຊຽງຄໍ້, ເມືອງແອດ.

ການລົງເຄື່ອນໄຫວຄັ້ງນີ້ ໄດ້ຮັບຟັງລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຈາກການນຳເມືອງ, ຫ້ອງການກ່ຽວຂ້ອງຂອງເມືອງ ແລະອຳນາດການປົກຄອງບ້ານ; ຈາກນັ້ນ, ໄດ້ເຈາະຈີ້ມບາງບັນຫາ ເປັນຕົ້ນແມ່ນການສົ່ງເສີມການຜະລິດເປັນສິນຄ້າ, ການຈັດຕັ້ງປະຕິບັດວຽກງານຂົງເຂດສຶກສາທິການ ແລະ ກິລາ, ສາທາລະນະສຸກ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ພ້ອມທັງແລກປ່ຽນຄຳຄິດເຫັນກ່ຽວກັບຂໍ້ສະດວກ, ຂໍ້ຫຍຸ້ງຍາກ ໃນການເຄື່ອນໄຫວວຽກງານໄລຍະຜ່ານມາ ແລະ ບັນຫາທີ່ຈະຕ້ອງໄດ້ເອົາໃຈໃສ່ໃນຕໍ່ໜ້າ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງເມືອງ, ບ້ານ ມີການພັດທະນານັບມື້ດີຂຶ້ນ.

ທ່ານ ສົມສັກ ດອນຈານິດ ໄດ້ເນັ້ນໜັກໃຫ້ການນຳເມືອງ ແລະ ອຳນາດການປົກຄອງບ້ານ ສືບຕໍ່ເຮັດວຽກງານການເມືອງແນວຄິດ ໃຫ້ພະນັກງານ-ລັດຖະກອນ, ພໍ່ແມ່ປະຊາຊົນ ມີຄວາມເຊື່ອໝັ້ນຕໍ່ການນຳພາ-ຊີ້ນຳພາຂອງພັກ; ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, 2 ວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ; ສົ່ງເສີມການຜະລິດທີ່ເປັນສິນຄ້າ, ສຸມໃສ່ຈັດເກັບລາຍຮັບເຂົ້າງົບປະມານ, ການຂຶ້ນທະບຽນອອກໃບຕາດິນ ແລະ ຈັດຕັ້ງປະຕິບັດບັນດາຕົວຊີ້ວັດຂອງວຽກງານຂົງເຂດສຶກສາທິການ ແລະ ກິລາ ເຊັ່ນ: ຊຸກຍູ້ປຸກລະດົມການເຂົ້າຮຽນຂອງນັກຮຽນທຸກຊັ້ນ ໃຫ້ເພີ່ມຂຶ້ນ, ແກ້ໄຂບັນຫາການປະລະການຮຽນ ແລະ ການຂາດແຄນຄູສອນ; ສຳລັບວຽກງານສາທາລະນະສຸກ ໃຫ້ສືບຕໍ່ປຸກລະດົມພໍ່ແມ່ປະຊາຊົນເຂດຫ່າງໄກສອກຫຼີກ ນຳເອົາລູກຫຼານໄປສັກຢາ, ຢອດຢາຕາມເກນອາຍຸ ແລະ ຮັບຢາວັກຊີນປ້ອງກັນພະຍາດຕ່າງໆ. ພ້ອມກັນນັ້ນ, ກໍເອົາໃຈໃສ່ກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງເມືອງ ໃຫ້ໄດ້ຮັບຜົນສຳເລັດຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້.

**(ນາງ ໃຈ ເພັດວິໄຊ)**

# ຍົກຄວາມສາມາດພາວະການເປັນຜູ້ນຳ, ວຽກງານສື່



(ສພຂ) - ວັນທີ 9-10 ທັນວາ 2024 ທີ່ເມືອງຄູນຄຳ, ສະພາປະຊາຊົນແຂວງ (ສພຂ) ຄຳມ່ວນ ໄດ້ຈັດກອງປະຊຸມເຝິກອົບຮົມພາວະການເປັນຜູ້ນຳແລະວຽກງານສື່ມວນຊົນ ໃຫ້ແກ່ສະມາຊິກສະພາປະຊາຊົນແຂວງ (ສສຂ) ແລະ ເສນາທິການຊ່ວຍວຽກ ໂດຍການເປັນປະທານຂອງທ່ານ ບົວພັນ ແສງຈັນ ຮອງປະທານສະພາປະຊາຊົນແຂວງຄຳມ່ວນ; ມີທ່ານ ສິງຕັນ ໄຊລີຊິ່ງ ຮອງປະທານສພຂຫຼວງພະບາງ, ທ່ານ ແກ້ວບຸນຂວັນ ໄຊຍະວົງສາ ເຈົ້າເມືອງຄູນຄຳ, ບັນດາທ່ານຄະນະປະຈຳສພຂຄຳມ່ວນ, ສສຂ ປະຈຳເຂດເລືອກຕັ້ງ 10 ເມືອງຂອງແຂວງຄຳມ່ວນ, ສສຂ ຫຼວງພະບາງ, ວິທະຍາກອນ ແລະ ພະນັກງານເສນາທິການຊ່ວຍວຽກຂອງ ສພຂ ຄຳມ່ວນ ແລະ ຫຼວງພະບາງ ລວມຜູ້ເຂົ້າຮ່ວມທັງໝົດ 97 ທ່ານ, ຍິງ 41 ທ່ານ.

ກອງປະຊຸມໄດ້ຮັບຟັງການສະເໜີຄວາມຮູ້ພື້ນຖານໃນການເປັນຜູ້ນຳ ແລະ ພາວະການເປັນຜູ້ນຳ; ຄວາມຮູ້ພື້ນຖານກ່ຽວກັບບົດບາດຍິງ-ຊາຍ, ການເຊື່ອມທັດສະນະບົດບາດຍິງ-ຊາຍ ເຂົ້າໃນການພັດທະນາ ແລະ ເຄື່ອງມືໃນການເຊື່ອມບົດບາດຍິງ-ຊາຍເຂົ້າໃນການວາງແຜນ; ເຕັກນິກການເກັບກຳພາບເພື່ອຍົກສູງບົດບາດຂອງເພດຍິງ ໂຄສະນາຜ່ານສື່ສັງຄົມອອນລາຍໃນການສົ່ງເສີມວຽກງານຄວາມສະເໝີພາບລະຫວ່າງຍິງ-ຊາຍ. ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ສຸມໃສ່ຄົ້ນຄວ້າ, ປະກອບຄຳຄິດຄຳເຫັນແລະສົນທະນາແລກປ່ຽນບົດຮຽນກັບວິທະຍາກອນໃນແຕ່ລະຫົວຂໍ້.

ໃນຕອນທ້າຍ, ທ່ານ ບົວພັນ ແສງຈັນ ໄດ້ມີຄຳເຫັນສະຫຼຸບວ່າ ກອງປະຊຸມເຝິກອົບຮົມຄັ້ງນີ້ ເຖິງວ່າຈະດຳເນີນພຽງແຕ່ 2 ວັນກໍຕາມ, ແຕ່ເຊື່ອໝັ້ນວ່າບັນດາທ່ານຜູ້ແທນ ແລະ ເສນາທິການຂອງສະພາປະຊາຊົນແຂວງຈະນຳເອົາເນື້ອໃນບົດຮຽນ ແລະ ທັກສະ ນຳໄປຈັດຕັ້ງປະຕິບັດໜ້າທີ່ວຽກງານຕາມພາລະບົດບາດຂອງຕົນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນກວ່າເກົ່າ.

ກອງປະຊຸມເຝິກອົບຮົມຄັ້ງນີ້ ໄດ້ຮັບການສະໜັບສະໜູນໂດຍອົງການເຮວວີຕັດ (HELVETAS).

**(ເອື້ອ ມະໂນສິງ)**

# ຕິດຕາມກວດກາການຈັດຕັ້ງປະຕິບັດ ໂຄງການກໍ່ສ້າງສູນບຳບັດດອນກຳມີ້



(ສພຂ)-ວັນທີ 11 ທັນວາ 2024 ຄະນະປະຈຳສະພາປະຊາຊົນແຂວງ (ສພຂ) ໄຊສົມບູນ ນຳໂດຍທ່ານ ຄຳພູທອນ ວົງພະຈັນ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງໄຊສົມບູນ ໄດ້ລົງຊຸກຍູ້, ຕິດຕາມກວດກາການຈັດຕັ້ງປະຕິບັດໂຄງການກໍ່ສ້າງສູນບຳບັດດອນກຳມີ້, ໃຫ້ການຕ້ອນຮັບໂດຍທ່ານ ພັອ. ທອງພຽນ ກົງສະເດັດ ຮອງຫົວໜ້າກອງບັນຊາການ ປກສ ແຂວງ ພ້ອມດ້ວຍພະນັກງານຈາກກອງບັນຊາການ ປກສ ແຂວງ ເຂົ້າຮ່ວມ.

ທ່ານ ຄຳພູທອນ ວົງພະຈັນ ໃຫ້ຮູ້ວ່າ: ການລົງຊຸກຍູ້, ຕິດຕາມກວດກາການຈັດຕັ້ງປະຕິບັດໂຄງການກໍ່ສ້າງສູນ ບຳບັດດອນກຳມີ້ ອ່າງນ້ຳງື່ມ 2 ແມ່ນເພື່ອເກັບກຳລາຍລະອຽດໃນການກໍ່ສ້າງ, ຄວາມຄືບໜ້າ ແລະ ຂໍ້ມູນຕົວຈິງທີ່ໄດ້ລົງມືປະຕິບັດຈັດຕັ້ງຈົນສຳເລັດຕາມເປົ້າໝາຍທີ່ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງໄຊສົມບູນ ໄດ້ຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຂ ໄຊສົມບູນ ຊຸດທີ II ແລະ ຈະນຳເອົາຂໍ້ມູນຂຶ້ນລາຍງານໃນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຂ ໄຊສົມບູນ ຊຸດທີ II ທີ່ຈະມາຮອດໃນໄວໆນີ້.

ທ່ານ ພັທ. ຄຳພູ ດາວຄູນສຸລີ ຫົວໜ້າຫ້ອງພະລາທິການ ລາຍງານໃຫ້ຮູ້ໂດຍຫຍໍ້ວ່າ: ໂຄງການກໍ່ສ້າງສູນບຳບັດດອນກຳມີ້ ອ່າງນ້ຳງື່ມ 2 ເລີ່ມຈັດຕັ້ງປະຕິບັດແຕ່ເດືອນ 6/2023-ເດືອນ 10/2024 ເປັນເວລາ 16 ເດືອນ; ໂດຍອີງໃສ່ທີ່ຕັ້ງ, ສະພາບອາກາດ, ການຂົນສົ່ງວັດສະດຸ ແລະ ອຸປະກອນ ສາມາດຕີລາຄາການຈັດຕັ້ງປະຕິບັດຈົນສຳເລັດ ເຊິ່ງມີລາຍລະອຽດຄື: ເຮືອນພະນັກງານ ຂະໜາດ 11x17.1 ແມັດ, ເຮືອນຄົວ 4x8 ແມັດ, ຫ້ອງນ້ຳພະນັກງານ 4x6 ແມັດ; ເຮືອນນອນດັດສ້າງຊາຍ, ເຮືອນຄົວ ແລະ ຫ້ອງນ້ຳ; ເຮືອນນອນດັດສ້າງຍິງ, ເຮືອນຄົວ ແລະ ຫ້ອງນ້ຳຍິງ; ຮົ້ວໜາມໝາກຈັບ, ໄຟຟ້າແສງອາທິດ, ພາຫະນະຂົນສົ່ງວັດສະດຸ ລວມມູນຄ່າທັງໝົດ 2,622,043,000 ກີບ (ສອງຕື້ຫົກຮ້ອຍຊາວສອງລ້ານສີ່ສິບສາມພັນ).

**(ອຳໄພພອນ ແກ້ວວິໄລ)**




# ເຂົາຫາມໝູ ຢ່າເອົາຄານໄປສອດ

# ດົ້ນກົບເມກ

ສຸພາສິດເພື່ອຊີວິດສຳລັບຜູ້ຮັກຫອມພູມປັນຍາບັນພະບຸລຸດ ແລະ ທັງເປັນການສຶກສາຕີຄວາມໃຫ້ເຂົ້າໃຈ ເອົາມາເປັນບົດຮຽນ ຫຼື ເປັນຄະຕິຊີວິດ ເພື່ອບໍ່ໃຫ້ທຸກບາດກ້າວເດີນຂອງຊີວິດຜິດພາດ, ເວົ້າໃຫ້ສັ້ນກໍຄືການນຳໃຊ້ບົດຮຽນຈາກອະດີດ (ປະຫວັດສາດ) ມາສົ່ງເສີມປັດຈຸບັນ ດີກວ່າຫຼົງລືມຂອງເກົ່າທີ່ບັນພະບຸລຸດສ້າງໄວ້ແລ້ວ ຫຼົງເຮັ່ນິຍົມຂອງໃໝ່, ບົດຮຽນປະຫວັດສາດໂຕໃດທີ່ຍັງໃຊ້ໄດ້ ບໍ່ຫຼ້າສະໄໝ ບໍ່ຂັດກັບຄວາມຈະເລີນໃນປັດຈຸບັນ ກໍນຳມາໃຊ້ ດັ່ງທີ່ຜູ້ຂຽນຍົກຫົວຂໍ້ສຸພາສິດໄວ້ຂ້າງເທິງພໍເປັນຕົວຢ່າງວ່າ: ເຂົາຫາມໝູຢ່າເອົາຄານໄປສອດ! ສຸພາສິດນີ້ ເປັນຂໍ້ຫ້າມວ່າການດຳເນີນຊີວິດຕ້ອງໄດ້ຮອບຄອບລະວັງໂຕສິ່ງທີ່ເຂົາບໍ່ຂໍຮ້ອງໃຫ້ຊ່ວຍ ກໍຈົ່ງໃສ່ໃຈໃນໜ້າທີ່ຕົນເອງໃຫ້ດີທີ່ສຸດ. ຄົນລາວບູຮານມັກຍົກປົດສະໜາຄຳເວົ້າບອກສອນລູກຫຼານໃຫ້ຮູ້ຈັກຄິດ ຄືຄິດໃຫ້ເປັນ, ຄິດຮອບຄອບໃຫ້ເຫັນເຫດຜົນ ເພື່ອໃຫ້ຕົນໄດ້ເກີດສະຕິປັນຍາ ບໍ່ລ່ວງເກີນສິດທິຄົນອື່ນ, ເຂົາຫາມໝູຢ່າເອົາຄານໄປສອດ ກິນຄວາມໝາຍເລິກ ແລະ ກວ້າງ. ວຽກບ້ານການເຮືອນຄົນອື່ນຖ້າເຂົາບໍ່ຮ້ອງຫາ-ເອີ້ນວານຂານຊ່ວຍ ເຮົາກໍຄວນເຮັດໜ້າທີ່ຂອງເຮົາໃຫ້ດີ ເຊິ່ງດີກວ່າໄປເສືອກເລື່ອງຂອງຄົນອື່ນ ນີ້ຄືປະເດັນ.

ຄະຕິການສິດສອນຂອງບູຮານລາວ ສຸພາສິດເພື່ອຊີວິດນີ້ ຜູ້ຂຽນຂໍຍົກຕົວຢ່າງຕື່ມເຊັ່ນວ່າ: ໄກ່ເຫັນຕີນງູ-ງູເຫັນນົມໄກ່ ຂໍ້ນີ້ເປັນສຸພາສິດຄົນບູຮານຍົກເອົາສັດສອງໂຕມາປຽບເປີຍໃນສິ່ງທີ່ເຂົາມີຫຼືບໍ່ມີແຕ່ປະເດັນມັນຢູ່ທີ່ຕ່າງຄົນຕ່າງເຊື່ອງສິ້ນແຕ່ບໍ່ມິດ ເຖິງແມ່ນວ່າໄດ້ຄິດໝັ້ນໃຈແລ້ວ ທີ່ໄດ້ມ້ຽນເຊື່ອງຊ້ອນ, ປົກປິດຄວາມຜິດພາດຂອງຕົນໄວ້ ແຕ່ສັດສອງໂຕນີ້ກໍຮູ້ທັນເລ່ຫຼ່ຽມກັນວ່າງູໄດ້ເຊື່ອງຕີນໄວ້ຄືໄກ່ໄດ້ເຊື່ອງນົມ. ເຊິ່ງຕົວຈິງສັດສອງໂຕນີ້ຕ່າງກໍບໍ່ມີນົມ ແລະ ບໍ່ມີຕີນ ແຕ່ມັນເປັນຄຳສອນປຽບເປີຍ ສະທ້ອນໃຫ້ເຫັນບັນຫາທີ່ເກີດຂຶ້ນ ງູບໍ່ມີຕີນ ແຕ່ກໍປຽບຄືກັບຄົນທີ່ບໍ່ມີຄວາມຜິດ ແຕ່ຖ້າວ່າຜູ້ໃດສ້າງຄວາມຜິດເກີດຂຶ້ນແລ້ວຄິດເຊື່ອງອຳຄວາມຜິດໄວ້ກໍປຽບຄື: ງູມີຕີນ ຜູ້ແນມເຫັນກໍຄືໄກ່ ເພາະວ່າໄກ່ບໍ່ມີນົມ ແຕ່ກໍໄດ້ເຮັດຄວາມຜິດຄືກັນກັບງູ ກໍເທົ່າກັບວ່າໄດ້ສ້າງຄວາມຜິດແລ້ວປົດບັງໄວ້ ເລື່ອງແບບນີ້ກໍມີແຕ່ຄົນຄືກັນຈຶ່ງຮູ້ທັນເລ່ຫຼ່ຽມກັນສົມກັບສຸພາສິດສອນໄວ້ວ່າ: ໄກ່ເຫັນຕີນງູ ສ່ວນງູຜັດເຫັນນົມໄກ່.

ສັງລວມແລ້ວຜູ້ຂຽນພຽງແຕ່ຍົກເອົາສຸພາສິດເຕືອນໃຈມາແລກປ່ຽນເປັນບົດຮຽນບໍ່ໃຫ້ຄົນເຮົາກ້າວເດີນຜິດພາດໃນຊີວິດ, ບົດຮຽນໃນອະດີດອັນໃດທີ່ຍັງມີຄ່ານຳໃຊ້ໃນປັດຈຸບັນ ຄວນນຳມາຕັກເຕືອນເຜີຍແຜ່ເຕືອນໃຈບໍ່ໃຫ້ຄົນຮຸ່ນຫຼັງຫຼົງລືມຄືກັບສຸພາສິດສອງເລື່ອງນັ້ນ ທີ່ເນັ້ນສອນບໍ່ໃຫ້ເສືອກຫຍຸ້ງເລື່ອງຂອງຄົນອື່ນເສຍມາລະຍາດ ແລະ ຄົນທີ່ມີຄວາມຜິດຮູ້ທັນເລ່ຫຼ່ຽມກັນ ຄືກັບ ໄກ່ເຫັນຕີນງູ ແລະ ງູກໍເຫັນຕີນໄກ່!.






# ນະໂຍບາຍສຸດເອື້ອ ເພື່ອຊາວກະສິກອນ

ມື້ນີ້ມີຂ່າວຕ່າງປະເທດຄື **ໜຶ່ງ:** ກ່ຽວກັບນະໂຍບາຍດີໆຂອງ ສ.ເກົາຫຼີ ເພື່ອສົ່ງເສີມຊາວກະສິກອນຮຸ່ນໃໝ່ ແລະ **ສອງ:** ແມ່ນກ່ຽວກັບສະຫະພາບເອີຣົບ ຫຼື ອີຢູ (EU) ໄດ້ອອກກົດໝາຍສະບັບໃໝ່ອ່ຽມ ເພື່ອຕ້ານທານກັບໄພຄຸກຄາມທາງໄຊເບີ ຫຼື ທາງອິນເຕີເນັດນັ້ນລະ.

ຈາກ ເຊອູນ ນະຄອນຫຼວງຂອງ ສ.ເກົາຫຼີມີຂ່າວອອກມາຫວ່າງບໍ່ດົນມານີ້ວ່າ ກະຊວງກະສິກຳ, ອາຫານແລະຊົນນະບົດຂອງປະເທດນີ້ ພວມກະກຽມຈັກຖົງງົບປະມານ ເພື່ອເອົາມາສະໜັບສະໜູນຊາວກະສິກອນຮຸ່ນໃໝ່ທີ່ຕ້ອງການໄປຕັ້ງຖິ່ນຖານຢູ່ຕາມເຂດຊົນນະບົດ, ໂຄງການນີ້ຊິວ່າໃໝ່ກໍບໍ່ແມ່ນ ເພາະຕັ້ງມາແລ້ວ 8 ປີ ຄືແຕ່ປີ 2018. ເຫດຜົນທີ່ຕ້ອງມີນະໂຍບາຍຊຸກຍູ້ທາງການເງິນໃຫ້ແກ່ຊາວກະສິກອນຮຸ່ນໃໝ່ກໍແມ່ນເພື່ອໃຫ້ພວກເຂົາເຈົ້າສາມາດຕັ້ງໂຕໄດ້ແຕ່ຫົວທີ, ຊາວກະສິກອນໃນຮຸ່ນນີ້ສ່ວນໃຫຍ່ ແມ່ນຄົນໃນໄວໜຸ່ມທີ່ຍັງຂາດປະສົບການໃນວຽກປູກຝັງລ້ຽງສັດ, ຍິ່ງເປັນການໄປຕັ້ງຖິ່ນຖານໃໝ່ໃນເຂດຫ່າງໄກສອກຫຼີກແລ້ວ ບັນຫາກໍແຮງຍິ່ງເພີ່ມຂຶ້ນ; ອີກປະການໜຶ່ງ ດຽວນີ້ສະພາບເສດຖະກິດຂອງປະເທດກໍບໍ່ຄ່ອຍເອື້ອອຳນວຍຊາວກະສິກອນຮຸ່ນໃໝ່ທີ່ຫາກໍລິເລີ່ມຕັ້ງໂຕ ກໍປະເຊີນກັບບັນຫາລາຍໄດ້ຫຼຸດລົງ. ນະໂຍບາຍກະຕຸກຊຸກຍູ້ທາງການນີ້ ແມ່ນການມອບເງິນສົດຈຳນວນ 1.1 ລ້ານວອນຕໍ່ເດືອນຕໍ່ກະສິກອນຮຸ່ນໃໝ່ 1 ຄົນ; ການມອບເງິນເປັນລາຍເດືອນນີ້ ກວມໄລຍະ 3 ປີ ແລະ ມີການຄາດໝາຍວ່າ ພາຍໃນທ້າຍປີ 2024 ນີ້ ຊາວກະສິກອນຮຸ່ນໃໝ່ ທີ່ຈະໄດ້ຮັບເງິນສະໜັບສະໜູນ ຈະມີຈຳນວນແຕ່ 5,000 ຫາ 17,600 ຄົນ. ສະຖິຕິຍັງຊີ້ໃຫ້ເຫັນອີກວ່າ ຊາວກະສິກອນທີ່ຍັງຂາດປະສົບການດ້ານກະສິກຳ ໄດ້ເພີ່ມຈາກ 42.5% ໃນປີ 2018 ມາເປັນ 78.3% ໃນປີ 2024; ສ່ວນສະຖິຕິດ້ານການສຶກສາໃນຂະແໜງກະສິກຳນັ້ນບອກວ່າ, ຊາວກະສິກອນຮຸ່ນໃໝ່ທີ່ບໍ່ມີໃບປະກາດຈົບວິຊາກະສິກຳ ໃນຂັ້ນມັດທະຍົມ ຫຼື ມະຫາວິທະຍາໄລນັ້ນ ກໍໄດ້ເພີ່ມຂຶ້ນຈາກ 65.6% ມາເປັນ 79.9% ໃນປັດຈຸບັນ, ຊາວກະສິກອນຮຸ່ນໃໝ່ທີ່ເປັນເພດຍິງທີ່ໄດ້ຮັບການຊ່ວຍເຫຼືອດ້ານການເງິນ ໄດ້ເພີ່ມຂຶ້ນຈາກ17.5%ໃນປີ2018ມາເປັນ29.6% ໃນປັດຈຸບັນ ເຊິ່ງສະແດງໃຫ້ເຫັນວ່າຈຳນວນແມ່ຍິງທີ່ສົນໃຈປະກອບອາຊີບດ້ານກະສິກຳໄດ້ເພີ່ມຂຶ້ນ. ທາງເບື້ອງລັດຖະບານນັ້ນ, ນອກຈາກຊ່ວຍສະໜັບສະໜູນດ້ານການເງິນແລ້ວ ຍັງມີແຜນສ້າງຟາມອັດສະລິຍະ 4 ແຫ່ງ ໃຫ້ຊາວກະສິກອນຮຸ່ນໃໝ່ເຊົ່າ ເປັນເວລາ 4 ປີ ໃນປີ 2025, ຈະເພີ່ມຈຳນວນຫໍພັກໃຫ້ເຊົ່າຈາກ 17 ແຫ່ງ ໃນປັດຈຸບັນເປັນ 27 ແຫ່ງ.

ເວົ້າໄດ້ວ່າແຜນສະໜັບສະໜູນຊາວກະສິກອນຮຸ່ນໃໝ່ຂອງລັດຖະບານ ສ.ເກົາຫຼີນີ້ ມີລັກສະນະຄົບວົງຈອນ, ທັງສະໜອງເງິນມີຟາມໃຫ້ເຊົ່າ ເພື່ອເຮັດການຜະລິດຕົວຈິງ; ນອກນັ້ນ, ຍັງມີຫໍພັກໃຫ້ເຊົ່າໃນລາຄາຍ່ອມເຍົາ. ແນວໃດກໍດີ ເມື່ອທຽບກັບຄວາມຕ້ອງການຕົວຈິງ ສ.ເກົາຫຼີ ຍັງຕ້ອງການຊາວກະສິກອນຮຸ່ນໃໝ່ທີ່ຮູ້ນຳໃຊ້ເຕັກໂນໂລຊີທັນສະໄໝອີກຢ່າງຫຼວງຫຼາຍ ເພື່ອຕອບສະໜອງຄວາມຕ້ອງການດັ່ງກ່າວ ສ.ເກົາຫຼີ ໄດ້ນຳເຂົ້າແຮງງານຕ່າງປະເທດເພື່ອຊ່ວຍແຮງ ເຊິ່ງສ່ວນໃຫຍ່ແມ່ນໃນຂະແໜງກະສິກຳ. ນີ້ຄືງເປັນຂ່າວດີສຳລັບແຮງງານລາວທີ່ຕ້ອງການໄປສະແຫວງໂຊກຢູ່ ສ.ເກົາຫຼີ ແຕ່ກໍຄວນບຸກບືນຊອກຫາຄວາມຮູ້ດ້ານທີ່ຈຳເປັນແຮໄວ້ ເພື່ອຈະໄດ້ມູນຄ່າເພີ່ມໃຫ້ແກ່ຕົນເອງ.




# ວິທີເຮັດວຽກ

**ພາກທີ 7**

**ບັນຫາພະນັກງານ**

**5. ວິທະຍາສາດ:** ຍົກຕົວຢ່າງ ພະນັກງານທະຫານກໍຕ້ອງຄົ້ນຄວ້າຮ່ຳຮຽນວິທະຍາສາດທະຫານພະນັກງານ. ພະນັກງານພະແນກສາທາລະນະສຸກ ກໍຄົ້ນຄວ້າຮ່ຳຮຽນວິທະຍາສາດການແພດ. ພະນັກງານງານພະແນກໃດໃຫ້ຄົ້ນຄວ້າຮ່ຳຮຽນທິດສະດີພະແນກນັ້ນ. ບັນດາອົງການນຳຂອງແຕ່ລະພະແນກຕ້ອງລວບລວມເອກະສານ, ກະວາງວິທີສອນ ແລະ ວິທີຮຽນ, ກວດກາເບິ່ງຜົນທີ່ໄດ້ຮັບເຮັດແນວໃດໃຫ້ພະນັກງານພະແນກຂອງຕົນຄ່ອຍໆເຄີຍເຮັດວຽກການເອງໄດ້.

**ຂ. ການອົບຮົມການເມືອງ:** ການເມືອງມີສອງຊະນິດຄື: ສະພາບການປັດຈຸບັນ ແລະ ນະໂຍບາຍ, ວິທີອົບຮົມສະພາບການປັດຈຸບັນແມ່ນແນະນຳ ແລະ ຊຸກຍູ້ໃຫ້ພະນັກງານອ່ານໜັງສືພິມ, ຖົກຖຽງ, ຊີ້ແຈງບັນດາບັນຫາສຳຄັນ ແລະ ກະວາງເວລາເປີດກອງປະຊຸມພະນັກງານ ແລະ ລາຍງານສະພາບການປັດຈຸບັນ.

ອົບຮົບນະໂຍບາຍ, ແມ່ນຊຸກຍູ້ພະນັກງານໃຫ້ຄົ້ນຄວ້າຖົກຖຽງກັນໃນເລື່ອງມະຕິຕົກລົງ, ໂຄງການ ແລະ ຖະແຫຼງການຂອງພັກ, ລັດຖະບານ ການອົບຮົມການເມືອງນັ້ນພະແນກໃດກໍຕ້ອງມີ. ແຕ່ຕ້ອງເບິ່ງຕາມຄວາມຕ້ອງການຂອງແຕ່ລະພະແນກເພື່ອກະວາງວ່າຈະໃຫ້ຮຽນຫຼາຍ ຫຼື ໜ້ອຍເທົ່າໃດ, ຍົກຕົວຢ່າງ ພະນັກງານວິຊາສະເພາະພະແນກການແພດ ແລະ ວັດທະນະທຳກໍຮຽນໜ້ອຍກວ່າ, ພະນັກງານພະແນກໂຄສະນາ, ຈັດຕັ້ງເຫຼົ່ານັ້ນຕ້ອງຄົ້ນຄວ້າຮ່ຳຮຽນການເມືອງຫຼາຍກວ່າ.

ອ່ານຕໍ່ສະບັບໜ້າ...

## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ຂ້ອງຂອງ ສພຊ, ຮອງລັດຖະມົນຕີກະຊວງຍຸຕິທຳ, ຮອງຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ຮອງປະທານຄະນະບໍລິຫານງານ ສສຍລ ພ້ອມດ້ວຍຄະນະກົມ, ຄະນະພະແນກແລະພະນັກງານຈາກ ສພຊ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານປອ. ນາງສູນທອນ ໄຊຍະຈັກ ກ່າວວ່າ: ກອງປະຊຸມຄັ້ງນີ້ ແມ່ນການພິຈາລະນາຄືນບັນດາຄຳເຫັນຂອງສະມາຊິກສະພາແຫ່ງຊາດໃນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ທີ່ຄະນະຮັບຜິດຊອບເຫັນດີ ຫຼື ບໍ່ປັບປຸງຕາມການສະເໜີ ແລະ ບັນຫາອື່ນທີ່ສະມາຊິກສະພາແຫ່ງຊາດບໍ່ໄດ້ຍົກຂຶ້ນ; ແຕ່ຫາກເຫັນວ່າຍັງບໍ່ສອດຄ່ອງ, ບໍ່ຄົບຖ້ວນ ຫຼື ການຂຽນຍັງບໍ່ຖືກຕ້ອງ ກໍຈະໄດ້ປັບປຸງ ແລະ ຮຽບຮຽງຄືນ ເພື່ອໃຫ້ເນື້ອໃນກົດໝາຍສອງສະບັບປັບປຸງນີ້ ມີຄວາມຈະແຈ້ງ, ຮັດກຸມ, ຖືກຕ້ອງຕາມເປົ້າໝາຍ, ເປັນລະບົບ ແລະ ສອດຄ່ອງກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ກ່ອນລາຍງານຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ແລະ ນຳສະເໜີທ່ານປະທານສະພາແຫ່ງຊາດພິຈາລະນາລົງລາຍເຊັນ.

ຜູ້ເຂົ້າຮ່ວມໄດ້ພ້ອມກັນຄົ້ນຄວ້າ, ສົນທະນາແລກປ່ຽນຕໍ່ຄຳເຫັນຂອງສະມາຊິກສະພາແຫ່ງຊາດ ແລະ ບັນຫາອື່ນທີ່ກອງປະຊຸມຕັ້ງຂຶ້ນ; ພ້ອມກັນນັ້ນ, ຄະນະຮັບຜິດຊອບກໍຄືສູນກາງສະຫະພັນແມ່ຍິງລາວ ໄດ້ອະທິບາຍ, ຊີ້ແຈງຕໍ່ທຸກບັນຫາຢ່າງເລິກເຊິ່ງ, ຮອບດ້ານ ແລະ ຮັດກຸມທີ່ສຸດ.

**(ນາງ ກຸກກິກ ບຸດດາໄຊ)**

## ຄາດວ່າ...

(ຕໍ່ຈາກໜ້າ 1)

ອະນຸກຳມະການເນື້ອໃນລາຍງານໃຫ້ຊາບວ່າ: ກ່ອນລົງທາບທາມຮ່າງລັດຖະທຳມະນູນດັ່ງກ່າວນີ້ ຢ່າງເປີດກວ້າງຢູ່ແຕ່ລະອົງການ ແລະ ທ້ອງຖິ່ນ, ຈະນຳເອົາຮ່າງລັດຖະທຳມະນູນສະບັບນີ້ ເຂົ້າຂໍທິດຊີ້ນຳຈາກກອງປະຊຸມກົມການເມືອງສູນກາງພັກ ເພື່ອເປັນທິດທາງໃຫ້ແກ່ການລົງທາບທາມ; ສຳລັບກຳນົດເວລາໃນການເປີດກອງປະຊຸມສະໄໝວິສາມັນຂອງ ສພຊ ເພື່ອພິຈາລະນາຮັບຮອງເອົາລັດຖະທຳມະນູນ, ຄະນະຮັບຜິດຊອບໄດ້ຄົ້ນຄວ້າ ແລະ ສະເໜີຈັດໃນໄລຍະວັນທີ 31 ມີນາ ຫາ 4 ເມສາ 2025.

**(ນາງ ກຸກກິກ ບຸດດາໄຊ)**

## ປະທານ...

(ຕໍ່ຈາກໜ້າ 1)

(12 ມິຖຸນາ 1996 ຫາ 12 ມິຖຸນາ 2024); ເຂົ້າຮ່ວມມີທ່ານປະທານກຳມາທິການວັດທະນະທຳ-ສັງຄົມ, ທ່ານເລຂາທິການສະພາແຫ່ງຊາດ, ທ່ານຮອງລັດຖະມົນຕີກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ພ້ອມດ້ວຍບັນດາສື່ມວນຊົນທຸກພາກສ່ວນຢູ່ສູນກາງ, ຄະນະທີ່ປຶກສາວຽກງານສື່ມວນຊົນຂອງ ສພຊ ແລະ ພາກສ່ວນທີ່ກ່ຽວຂ້ອງ ລວມທັງໝົດ 85 ທ່ານ, ຍິງ 31 ທ່ານ.

ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ສະແດງຄວາມຮູ້ສຶກພາກພູມໃຈເປັນຢ່າງຍິ່ງທີ່ໄດ້ມີໂອກາດພົບປະແລະໂອ້ລົມນັກຂ່າວສື່ມວນຊົນຂອງສະພາແຫ່ງຊາດ, ບັນດາອົງການຈັດຕັ້ງພັກ-ລັດແລະພາກສ່ວນຕ່າງໆໃນໂອກາດວັນສ້າງຕັ້ງສື່ມວນຊົນສະພາແຫ່ງຊາດ ຄົບຮອບ 28 ປີ ແລະ ການຜະລິດໜັງສືພິມຜູ້ແທນປະຊາຊົນ ສະບັບທີ 1,000 ທັງຍື້ຍາມຖາມຂ່າວອັນອົບອຸ່ນບັນດານັກຂ່າວສື່ມວນຊົນທີ່ເຂົ້າຮ່ວມໃນມື້ນີ້ແລະຂໍຝາກຄວາມຍື້ຍາມຖາມຂ່າວ, ຄວາມຄິດຮອດຄິດເຖິງ, ຄວາມເປັນຫ່ວງເປັນໄຍ ໄປຍັງບັນດານັກຂ່າວສື່ມວນຊົນທີ່ກຳລັງປະຕິບັດໜ້າທີ່ວິຊາສະເພາະຢູ່ສະຖານທີ່ຕ່າງໆໃນຂອບເຂດທົ່ວປະເທດ, ຢູ່ເຂດຫ່າງໄກສອກຫຼີກ, ເຂດທຸລະກັນດານ ຂໍໃຫ້ບັນດາທ່ານຈົ່ງມີສຸຂະພາບແຂງແຮງ, ຕັ້ງໜ້າປະຕິບັດວຽກງານໃຫ້ໄດ້ຮັບຜົນສຳເລັດ, ເຮັດໃຫ້ການນຳເອົາຂໍ້ມູນຂ່າວສານຂອງພັກ-ລັດ ສົ່ງໄປເຖິງປະຊາຊົນລາວບັນດາເຜົ່າ ຢ່າງຄົບຖ້ວນ ແລະ ມີປະສິດທິພາບ.

ທ່ານປະທານສະພາແຫ່ງຊາດຕີລາຄາສູງຕໍ່ຄວາມບຸກບືນ, ຫ້າວຫັນຂອງສື່ມວນຊົນຕ່າງໆໃນການປະຕິບັດໜ້າທີ່ການເມືອງຂອງຕົນໄດ້ຮັບຜົນສຳເລັດຫຼາຍດ້ານເປັນຕົ້ນການໂຄສະນາເຜີຍແຜ່ການເຄື່ອນໄຫວວຽກງານຂອງສູນກາງພັກ, ການດຳເນີນກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດແຕ່ລະຄັ້ງ, ການເປັນເຈົ້າພາບຈັດກອງປະຊຸມສຸດຍອດອາຊຽນ ຄັ້ງທີ 44 ແລະ 45, ກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ໄດ້ຮັບຜົນສຳເລັດເປັນຢ່າງດີ ເຮັດໃຫ້ປະຊາຊົນບັນດາເຜົ່າໄດ້ຮັບຮູ້ການເຄື່ອນໄຫວຂອງພັກ-ລັດ. ສຳລັບວຽກງານສື່ມວນຊົນຂອງສະພາແຫ່ງຊາດໄດ້ຮັບການສ້າງຕັ້ງ ແລະ ປະຕິບັດໜ້າທີ່ການເມືອງຂອງຕົນມາຮອດປັດຈຸບັນ ໄດ້ມີອາຍຸການ 28 ປີ ແລະ ໄດ້ຮັບການພັດທະນາຢ່າງບໍ່ຢຸດຢັ້ງ ເປັນຕົ້ນໜັງສືພິມ, ວິທະຍຸກະຈາຍສຽງ, ໂທລະພາບ, ສື່ສັງຄົມອອນລາຍເຮັດໃຫ້ການໂຄສະນາເຜີຍແຜ່ການເຄື່ອນໄຫວຂອງສະພາແຫ່ງຊາດ ມີຄວາມກວ້າງຂວາງແລະ ມີປະສິດທິຜົນນັບມື້ສູງຂຶ້ນ; ພິເສດ, ການພິມໜັງສືພິມຜູ້ແທນປະຊາຊົນຂອງສະພາແຫ່ງຊາດ ມາຮອດປັດຈຸບັນໄດ້ກ້າວເຂົ້າສູ່ສະບັບທີ 1,000 ໃນອາທິດທີ່ຈະມາເຖິງນີ້.

ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ຕາງໜ້າໃຫ້ກົມການເມືອງສູນກາງພັກ, ຄະນະປະຈຳສະພາແຫ່ງຊາດ ສະແດງຄວາມຍ້ອງຍໍຊົມເຊີຍບັນດາສື່ມວນຊົນທີ່ສາມາດຍາດໄດ້ຜົນສຳເລັດໃນການເຄື່ອນໄຫວວຽກງານ, ປະກອບສ່ວນເຂົ້າໃນການໂຄສະນາເຜີຍແຜ່ແນວທາງນະໂຍບາຍຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ, ກົດໝາຍ ແລະ ເອກະສານສຳຄັນຂອງພັກ-ລັດ ໄດ້ຮັບຜົນສຳເລັດເປັນຢ່າງດີຕະຫຼອດມາ.

ນອກນັ້ນ, ທ່ານປະທານສະພາແຫ່ງຊາດຍັງໄດ້ມີຄຳເຫັນເນັ້ນໜັກບາງບັນຫາສຳຄັນດັ່ງນີ້:

1. ການເຄື່ອນໄຫວວຽກງານສື່ມວນຊົນ ຕ້ອງຮັບປະກັນການຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ແນວທາງນະໂຍບາຍຂອງພັກ ໃຫ້ສັງຄົມໄດ້ຮັບຮູ້ເຂົ້າໃຈ ແລະ ເຂົ້າຮ່ວມການຈັດຕັ້ງປະຕິບັດ ດັ່ງຄຳເຫັນຂອງປະທານ ໄກສອນ ພົມວິຫານ ໄດ້ກ່າວໄວ້ວ່າ "...ທຸກການເຄື່ອນໄຫວດ້ານຖະແຫຼງຂ່າວ, ໜັງສືພິມ, ການກະຈາຍສຽງ, ການພິມຈຳໜ່າຍ, ຮູບເງົາ, ສິລະປະວັນນະຄະດີ... ຕ້ອງສະແດງອອກເປັນຈິງເຖິງເນື້ອໃນ ແລະ ລັກສະນະວັດທະນະທຳໃໝ່ທີ່ກ້າວໜ້າ, ຕ້ອງຕິດແໜ້ນກັບແນວທາງນະໂຍບາຍຂອງພັກ ແລະ ລັດ, ຕ້ອງຕິດແໜ້ນກັບຊີວິດອອກແຮງງານກໍ່ສ້າງ ແລະ ການຕໍ່ສູ້ຂອງປະຊາຊົນບັນດາເຜົ່າ ແນໃສ່ເຊີດຊູສະຕິຕື່ນຕົວສັງຄົມນິຍົມ, ນ້ຳໃຈຝຶກຝົນອອກແຮງງານ, ປະດິດສ້າງຂອງປະຊາຊົນບັນດາເຜົ່າ ໃນພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ..." ຄຳເຫັນຂອງປະທານ ໄກສອນ ພົມວິຫານ ມີຄຸນຄ່າ ແລະ ເປັນເຂັມທິດເຍືອງທາງໃຫ້ແກ່ການເຄື່ອນໄຫວວຽກງານສື່ມວນຊົນຂອງພວກເຮົາຕະຫຼອດໄປ.

2. ວຽກງານສື່ມວນຊົນເປັນວຽກງານທີ່ມີຄວາມສຳຄັນ, ເປັນປາກກະບອກສຽງໃນການໂຄສະນາເຜີຍແຜ່ແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ ລວມທັງການເຄື່ອນໄຫວວຽກງານຂອງສູນ

ອ່ານຕໍ່ໜ້າ 12

## ອາດ ກະວີລາວ

# ສະບາຍດີປີໃໝ່

**# ດອນຊ້ອນ ດອນໄຊ**

✻ 2024 ຍົກຍ່າງຍ້າຍ    ໄກຫ່າງຮາມໜີ
ມີແຕ່ຜົນງານງາມ    ມາກມາຍປະໄວ້
ປີໃໝ່ 2025 ຫຍັບມາໃກ້    ເກນໝາຍບອກເຫດ
365 ວັນຂວບເຂົ້າ    ໂຮມເຕົ້າໜຶ່ງປີ

✻ ສະບາຍດີທົ່ວໜ້າ    ນ້ອງພີ່ສະຫາຍຮັກ
ເພື່ອນຮ່ວມງານທັງຫຼາຍ    ຮ່ວມໃຈປະສົງສ້າງ
ທຸກຢ່າງເດີນມາໄດ້    ຜົນງານງາມໂຮມຮ່ວມ ກັນນັ້ນ!
ມາຈາກເຈົ້າ ແລະ ຂ້ອຍ    ທັງຂ້ອຍ ແລະ ເຈົ້າ    ມາໂຮມເຂົ້າໜຶ່ງດຽວ

✻ ນີ້ແຫຼະເພິ່ນວ່າໄວ້    ໂຮມຮ່ວມກະທຳດີ
ສາມັກຄີປອງດອງ    ແກ່ນແຂງແຮງກ້າ
ພ້ອມພໍ່າບຸກບືນໜ້າ    ກະທຳການຂັນແຂ່ງ
ອອກແຮງງານກໍ່ສ້າງ    ໃຫ້ເມືອງບ້ານຮຸ່ງຈະເລີນ

✻ ສ້າງ ຄສ 2025 ຢູ່ນີ້    ເປັນປີໃໝ່ໄຊງາມ
ຈົ່ງຮ່ວມແຮງທຳຕາມ    ໜ້າທີ່ການວາງໄວ້
ສ້າງຜົນງານງາມໃຫ້    ຫວິດຄວາມຍາກຈົນ
ແຕ່ລະຄົນດັ່ງດ້າມ    ກະທຳສ້າງເຊັ່ນກັນ

✻ ຫຼາຍເຮືອນເຮັດເຊັ່ນນັ້ນ    ຈົນທົ່ວເຖິງກັນ
ສຽງແຂ່ງຂັນຕະລຸມບອນ    ເປັ່ງປະກາຍເໜືອໃຕ້
ບັດນີ້ຄົງຈະໄດ້    ສະຫຼອງໄຊໂຊກໃຫຍ່
ທຸກຄອບຄົວເຮັດໄດ້    ແມ່ນຫຼຸດພົ້ນທຸກຈົນ ແທ້ເນີ!



## ທັກທາຍ ລະບາຍ

*(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສຽມທ້ຽນ**

✻ **ສະບາຍດີປີໃໝ່ສາກົນ** ປີ 2025 ທີ່ກຳລັງຈະເດີນທາງມາເຖິງໃນມໍ່ໆນີ້ ໜຶ່ງປີກຽມຜ່ານພົ້ນ ເຫີນຫ່າງລາໄປ ໜຶ່ງປີກຽມຜ່ານກາຍ ເຮັດຫຍັງມາໄດ້ ອັນໃດຍັງຄົງຄ້າງ ແຜນການໃຫ້ສານຕໍ່ **ຂໍດີຕື່ມແຕ່ງສ້າງ ອັບປີລັງໄຊໃຫ້ຫຼີກໄກ** ແລະ ເນື່ອງໃນໂອກາດນີ້ ຮຽນຂໍຝາກພອນໄຊ ສົ່ງໄປຍັງແຟນຄໍລຳ ມິດສະຫາຍທົ່ວແດນດ້າວ ຂໍໃຫ້ສຸກໃຈລົ້ນ ສົມຫວັງທຸກຢ່າງ ສຸຂະພາບພຽບພ້ອມ ການງານກ້າວລື່ນກວ່າຫຼັງ **ທຸກທ່ານເດີ!**

✻ **ສະ**ແດງຄວາມຊົມເຊີຍນັກຂ່າວສະພາປະຊາຊົນແຂວງທົ່ວປະເທດ ທີ່ຂະຫຍັນຫັນຫ້າວ ຂຽນຂ່າວສົ່ງໃຫ້ໜັງສືພິມຜູ້ແທນປະຊາຊົນ ຢ່າງເປັນລະບອບພົດພື້ນ **ເຊິ່ງບາງເຂດບາງຄົນອົດທົນຂຽນ** ແລະ ສົ່ງມາໃຫ້ທີມງານກົມສື່ມວນຊົນຂອງພວກເຮົາ ໃນໂມງເລີກການກໍມີ ສຸດທີ່ດີໃຈລົ້ນ ເຫັນຫຼາຍຄົນເອົາໃຈໃສ່ ມີບາງແຂວງເຂດນັ້ນ ຂະຫຍັນຫັນຫ້າວສົ່ງຂ່າວມາ ຈົນບໍ່ເຊີນຊາດແທ້ງ ເນື້ອໃນຂ່າວການເຄື່ອນໄຫວ ອອກໃຫ້ລຽນທຸກສະບັບ ບໍ່ປ່ອຍປະວ່າງໄວ້ ພື້ນທີ່ໜັງສືພິມໃຫ້ ເຂດໃດຈັບຈອງ ຄອງແຊ່ມເຜີຍແຜ່ເລື່ອງ ຜົນງານບ້ານຂອງຮຽກເຄື່ອນໄຫວ **ຂໍທັກທາຍເພື່ອນຜູ້ ເທີນທາງການຂຽນ** ຄົນຢູ່ດີມີແຮງໃຫ້ໝັ່ນຂຽນ ທະຍອຍໃຫ້ໜັງສືພິມຜູ້ແທນປະຊາຊົນ ໄດ້ບັນທຶກນາມຂຽນຊື່ **ແດ່ທອນ!** ຢ່າໄດ້ປະປ່ອຍໃຫ້ ໜັງສືພິມເສົ້າຫງ່ອມເຫງົາ **ທ່ານເອີຍ!**

## ຊວນຍິ້ມ

# ແອ່ນຕຸ້ງ

### ເລື່ອງ: ເອີ້ນພໍ່

ມີຊາຍແປກໜ້າຄົນໜຶ່ງມາເຮືອນຂອງສົມສີ ໂດຍມີແມ່ຂອງສົມສີໄປຮັບຕ້ອນເປັນຢ່າງດີ ແລ້ວເຊີນເຂົ້າມານັ່ງໃນເຮືອນ

**ແມ່:** ສະບາຍດີເພີ່ນແລ້ວ ເອີ້ນພໍ່ເດີລູກ

**ສົມສີ:** ພໍ່ຂ້ອຍມີຄົນດຽວ (ຄິດໃນໃຈ)

**ແມ່:** ອ້າວ....ບອກເອີ້ນພໍ່ຄືບໍ່ເອີ້ນ ບໍ່ໄດ້ຍິນບໍ່ຫູຫັ້ນ

ສົມສີນັ່ງໜ້າບູດ ນ້ຳຕາຊືມ ຈົນແມ່ຮ້ອງກ໊າກມາໃສ່

**ແມ່:** ເອີ້ນພໍ່ແມ......

**ສົມສີ:** ພະໆ...... ພໍ່

**ແມ່:** ພໍ່ມຶງຢູ່ຫຼັງເຮືອນໄປເອີ້ນມາແມ ມາເອີ້ນຢູ່ນີ້ລາວຊິໄດ້ຍິນມຶງບໍ່ ລະມຶງຊິໃຫ້ເຮັດຫຍັງ

?????????

## ຄະຕິເຕືອນໃຈ

# ດອກຫຍ້າ

ໃຜຜູ້ເມົາມົວຄ້ານ    ການງານບໍ່ຕັ້ງຕໍ່
ບໍ່ມີວັນຊິພົບພໍ້    ເງິນລ້ານຄ່າແພງ ດອກນາ!

ລັດຖະສະພາຕ່າງປະເທດ

# ອີຣານ ລະງັບບັງຄັບໃຊ້ ກົດໝາຍ hijab ສະບັບໃໝ່



ສຳນັກຂ່າວ AFP ລາຍງານເມື່ອວັນທີ 17 ທັນວາຜ່ານມາວ່າອີຣານລະງັບການບັງຄັບໃຊ້ກົດໝາຍຮິຢາບ(ຜ້າປົກຫົວທີ່ແມ່ຍິງຊາວມຸດສະລິມໃສ່) ເຊິ່ງໃນເບື້ອງຕົ້ນຈະມີຜົນໃນວັນສຸກທີ 20 ທັນວາ 2024.

ທ່ານມາຊູດເປເຊຊຄຽນ (MasoudPezeshkian)ປະທານາທິບໍດີອີຣານ ຮຽກກົດໝາຍສະບັບດັ່ງກ່າວວ່າ"ຄຸມເຄືອແລະຕ້ອງປັບປຸງ" ພ້ອມທັງສະແດງຄວາມຕັ້ງໃຈທີ່ຈະພິຈາລະນາມາດຕະການໃໝ່ ເນື່ອງຈາກການເພີ່ມການລົງໂທດທີ່ຮຸນແຮງສຳລັບແມ່ຍິງແລະເດັກຍິງ ຖ້າພວກເຂົາເປີດເຜີຍຜົມ,ແຂນສ່ວນເທິງແລະຂາສ່ວນລຸ່ມຖືກວິພາກວິຈານຢ່າງໜັກຈາກນັກເຄື່ອນໄຫວສິດທິມະນຸດ.

ພາຍໃຕ້ກົດໝາຍສະບັບໃໝ່ ຜູ້ທີ່ຝ່າຝືນຊ້ຳແລ້ວຊ້ຳອີກ ແລະ ຜູ້ທີ່ລະເມີດກົດລະບຽບດັ່ງກ່າວ ຈະຖືກປັບໃໝເງິນເພີ່ມ ແລະ ຕິດຄຸກດົນຂຶ້ນ ສູງສຸດ 15 ປີ, ໃນຂະນະທີ່ທຸລະກິດຕ່າງໆຕ້ອງລາຍງານຜູ້ລະເມີດອີກດ້ວຍ.

ລະຫວ່າງການໂຄສະນາຫາສຽງເລືອກຕັ້ງປະທານາທິບໍດີເມື່ອເດືອນກໍລະກົດຜ່ານມາ, ທ່ານ ເປເຊຊຄຽນ ໄດ້ວິພາກວິຈານຢ່າງເປີດເຜີຍຕໍ່ການປະຕິບັດຕໍ່ແມ່ຍິງໃນອີຣານກ່ຽວກັບບັນຫາຮິຢາບ ໂດຍທ່ານໄດ້ສັນຍາວ່າຈະບໍ່ແຊກແຊງຊີວິດສ່ວນຕົວຂອງພວກນາງ ເຊິ່ງເປັນທ່າທີທີ່ໄດ້ໃຈຂອງຊາວອີຣານຢ່າງຫຼວງຫຼາຍ ໂດຍສະເພາະຄົນຮຸ່ນໃໝ່ທີ່ບໍ່ພໍໃຈກັບການຄວບຄຸມຢ່າງເຂັ້ມງວດຂອງລັດຖະບານ.

ໜຶ່ງອາທິດກ່ອນໜ້ານີ້ ນັກເຄື່ອນໄຫວສິດທິມະນຸດ, ນັກຂຽນ ແລະ ນັກຂ່າວຊາວອີຣານ 300 ກວ່າຄົນ ໄດ້ເຕົ້າໂຮມກັນເພື່ອປະນາມກົດໝາຍຮິຢາບວ່າ "ບໍ່ເປັນໄປຕາມກົດໝາຍ ແລະ ບັງຄັບໃຊ້ບໍ່ໄດ້" ພ້ອມທັງຮຽກຮ້ອງໃຫ້ທ່ານ ເປເຊຊຄຽນ ຮັກສາຄຳສັນຍາຂອງຕົນທີ່ໃຫ້ໄວ້ຕອນຫາສຽງ.

# Bangladesh ມີແຜນຈັດການເລືອກຕັ້ງທົ່ວໄປ ໃນທ້າຍປີ 2025 ຫຼື ກາງປີ 2026



(Xinhua) - ທ່ານ ມູຮຳໝັດ ຢູນຸສ (Muhammad Yunus) ຫົວໜ້າທີ່ປຶກສາຂອງລັດຖະບານຮັກສາການບັງກລາເທດ (ຫົວໜ້າລັດຖະບານ ຫຼື ນາຍົກລັດຖະມົນຕີຮັກສາການ) ກ່າວວ່າ ອາດເປັນໄປໄດ້ທີ່ຈະຈັດການເລືອກຕັ້ງທົ່ວໄປຄັ້ງຕໍ່ໄປ ໃນທ້າຍປີ 2025 ຫຼື 6 ເດືອນຕົ້ນປີ 2026; ທ່ານກ່າວໃນຄຳປາໄສທາງໂທລະພາບຕໍ່ປະເທດຊາດ ໃນເວລາ 10:00 ໂມງເຊົ້າຕາມເວລາທ້ອງຖິ່ນເມື່ອວັນຈັນທີ16ທັນວາຜ່ານມາວ່າ "ການເລືອກຕັ້ງສາມາດກຳນົດໄດ້ລະຫວ່າງທ້າຍປີ 2025 ຫາ 6 ເດືອນຕົ້ນປີ 2026" ເຊິ່ງຖືເປັນວັນໄຊຊະນະຂອງປະເທດ.

ທ່ານ ຢູນຸສ ກ່າວວ່າ ທ່ານໄດ້ຮ້ອງຂໍຊ້ຳແລ້ວຊ້ຳອີກໃຫ້ທຸກຄົນຈັດການເລືອກຕັ້ງຫຼັງຈາກສຳເລັດການປະຕິຮູບຄັ້ງສຳຄັນທີ່ຈຳເປັນທັງໝົດ; ຢ່າງໃດກໍຕາມ, ເນື່ອງຈາກຄວາມເຫັນດີທາງການເມືອງຮ່ວມກັນ, ຈຶ່ງອາດເປັນໄປໄດ້ທີ່ຈະຈັດການເລືອກຕັ້ງໃນທ້າຍປີ 2025 ຫຼັງຈາກສຳເລັດການປະຕິຮູບເລັກໜ້ອຍ ໂດຍອີງໃສ່ການກະກຽມບັນຊີລາຍຊື່ຜູ້ມີສິດເລືອກຕັ້ງທີ່ຖືກຕ້ອງ.

ທ່ານຮຽກຮ້ອງໃຫ້ຄະນະກຳມະການການເລືອກຕັ້ງ, ສະຖາບັນທາງສັງຄົມແລະພັກການເມືອງຕ່າງໆ ດຳເນີນໂຄງການສ້າງສັນຕ່າງໆເພື່ອບັນລຸເປົ້າໝາຍນີ້; ທ່ານສະເໜີໃຫ້ສ້າງປະເພນີດັ່ງກ່າວຂຶ້ນ ເພື່ອໃຫ້ຜູ້ມີສິດເລືອກຕັ້ງຄັ້ງທຳອິດໃນທຸກການເລືອກຕັ້ງ ລວມທັງການເລືອກຕັ້ງລັດຖະບານທ້ອງຖິ່ນໝັ້ນໃຈໄດ້ວ່າຈະມີການລົງຄະແນນສຽງປະມານ 100%ຢູ່ໃນທຸກສູນເລືອກຕັ້ງ.

ຫົວໜ້າທີ່ປຶກສາກ່າວຕື່ມວ່າ: "ຫາກພວກເຮົາສາມາດຮັບປະກັນເລື່ອງນີ້ໄດ້, ລັດຖະບານໃນອະນາຄົດກໍຈະບໍ່ກ້າຍາດສິດການລົງຄະແນນສຽງຂອງປະຊາຊົນ."

ທ່ານ ຢູນຸສ, ອາຍຸ 84 ປີ, ນັກເສດຖະສາດຊາວບັງກລາເທດ ເຂົ້າຮັບຕຳແໜ່ງເປັນຫົວໜ້າລັດຖະບານຮັກສາການຂອງປະເທດ ໃນວັນທີ 8 ສິງຫາ 2024.

# ສະພາ Estonia ອະນຸມັດພາສີຄວາມໝັ້ນຄົງ ແລະ ກົດໝາຍສາທາລະນະສຸກສະບັບໃໝ່



(Xinhua)-ສະພາແຫ່ງລັດແອັດສະໂຕນີ ຫຼື ລັດຖະສະພາ ໄດ້ຜ່ານຮ່າງກົດໝາຍທີ່ລັດຖະບານສະເໜີ ເພື່ອນຳພາສີຄວາມໝັ້ນຄົງມາໃຊ້ ແນໃສ່ເພີ່ມຂີດຄວາມສາມາດດ້ານປ້ອງກັນປະເທດ.

ພາສີຄວາມໝັ້ນຄົງ ປະກອບດ້ວຍສາມອົງປະກອບທີ່ສຳຄັນ: ທຳອິດ, ພາສີມູນຄ່າເພີ່ມ (VAT) ຈະເພີ່ມຂຶ້ນ 2% ເລີ່ມຕົ້ນໃນກາງປີ2025;ອັນທີສອງ, ອັດຕາພາສີລາຍໄດ້ສ່ວນບຸກຄົນກໍຈະເພີ່ມຂຶ້ນ 2% ໂດຍການປ່ຽນແປງຈະມີຜົນບັງຄັບໃຊ້ໃນຕົ້ນປີ 2026; ສຸດທ້າຍ, ພາສີກຳໄລຂອງບໍລິສັດໃໝ່ ເຊິ່ງກຳນົດໄວ້ທີ່ 2% ຈະຖືກນຳມາໃຊ້ໃນເວລາດຽວກັນກັບການເພີ່ມພາສີລາຍໄດ້ສ່ວນບຸກຄົນ.

ພາຍໃຕ້ກົດໝາຍໃໝ່ VAT ຈະເພີ່ມຂຶ້ນເປັນ 24% ຕັ້ງແຕ່ເດືອນກໍລະກົດ 2025 ແລະ ອັດຕາພາສີລາຍໄດ້ສ່ວນບຸກຄົນກໍຈະເພີ່ມຂຶ້ນເປັນ24% ນັບຕັ້ງແຕ່ປີ 2026.

ກະຊວງການເງິນຄາດຄະເນວ່າ ພາສີໃໝ່ຈະສ້າງລາຍຮັບງົບປະມານເພີ່ມຕື່ມ 113 ລ້ານເອີໂຣ(119ລ້ານໂດລາສະຫະລັດ) ໃນປີ2025 ແລະ 751 ລ້ານເອີໂຣ ໃນປີ 2026, ລາຍລະອຽດກ່ຽວກັບການຈັດສັນ ແລະນຳໃຊ້ເງິນເຫຼົ່ານີ້ ຈະກຳນົດໄວ້ໃນແຜນງົບປະມານແຫ່ງລັດປີ2025ແລະຍຸດທະສາດແຜນງົບປະມານປີ 2025-2028.

ຮ່າງກົດໝາຍດັ່ງກ່າວໄດ້ຮັບການອະນຸມັດໃນລັດຖະສະພາ ເມື່ອວັນພຸດທີ 11 ທັນວາຜ່ານມາ ໂດຍມີຜູ້ລົງຄະແນນສຽງເຫັນດີ 53 ທ່ານ ແລະ ຄັດຄ້ານ 27 ທ່ານ (ສະພາແຫ່ງລັດມີ 101 ທີ່ນັ່ງ).

(1 ເອີໂຣ = 1.05 ໂດລາສະຫະລັດ).

ໃນວັນດຽວກັນ,ລັດຖະສະພາໄດ້ຜ່ານກົດໝາຍສາທາລະນະສຸກສະບັບໃໝ່ ໂດຍກຳນົດໃຫ້ການບໍລິການສັກລາຍ (tattoo) ແລະ ຟອກຜິວໜັງ (tan) ຜິດກົດໝາຍສຳລັບຜູ້ເຍົາ; ກົດໝາຍສະບັບນີ້ທີ່ຈະມີຜົນບັງຄັບໃຊ້ໃນວັນທີ 1 ກັນຍາ 2025 ຈະຈຳກັດການໃຫ້ບໍລິການຫ້ອງອາບແສງແດດ(solarium)ແລະບໍລິການສັກລາຍ ສະເພາະຜູ້ໃຫຍ່ທີ່ມີອາຍຸ 18 ປີຂຶ້ນໄປເທົ່ານັ້ນ.

ຕາມຂໍ້ມູນຂອງກະຊວງກິດຈະການສັງຄົມ, ກົດໝາຍດັ່ງກ່າວໄດ້ອອກແບບມາເພື່ອເພີ່ມທະວີການຄຸ້ມຄອງສຸຂະພາບຂອງປະຊາຊົນ ແລະ ສົ່ງເສີມສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ຊີວິດທີ່ຍືນຍາວ ແລະ ມີສຸຂະພາບທີ່ດີຂຶ້ນ; ນອກຈາກນີ້, ຍັງໄດ້ວາງຂໍ້ກຳນົດທີ່ເຂັ້ມງວດຍິ່ງຂຶ້ນກ່ຽວກັບສິນຄ້າແລະການບໍລິການທີ່ມີຄວາມສ່ຽງຕໍ່ສຸຂະພາບ ລວມເຖິງການຈຳກັດການນຳໃຊ້ພິດ, ສັດ, ຜະລິດຕະພັນຈາກພືດ ແລະ ສັດ ທີ່ເປັນພິດ, ແລະ ສານເຄມີອັນຕະລາຍ.

ກະຊວງໄດ້ເນັ້ນຢ້ຳເຖິງຄວາມສ່ຽງດ້ານສຸຂະພາບທີ່ກ່ຽວຂ້ອງກັບການສັກລາຍ ໂດຍສະເພາະຈາກສີຍ້ອມ (dye) ທີ່ໃຊ້ໃນຂະບວນການດັ່ງກ່າວ.

# Maldives ບັງຄັບໃຊ້ກົດໝາຍຫ້າມຢາສູບໄຟຟ້າທົ່ວປະເທດ

(Xinhua) - ປະເທດມານດິວ ຫຼື ມານດີບ ບັງຄັບໃຊ້ກົດໝາຍຫ້າມນຳໃຊ້ແລະຂາຍອຸປະກອນຢາສູບໄຟຟ້າແບບໃຊ້ແລ້ວຖິ້ມໃນທົ່ວປະເທດ ເລີ່ມຕັ້ງແຕ່ເວລາທ່ຽງຄືນວັນເສົາທີ 14 ທັນວາ 2024, ອີງຕາມການລາຍງານຂອງສື່ມວນຊົນແຫ່ງລັດ (PSM).




ກົດໝາຍສະບັບນີ້ ມີຂຶ້ນຫຼັງຈາກທີ່ໄດ້ປັບປຸງກົດໝາຍວ່າດ້ວຍການຄວບຄຸມຢາສູບ ເຊິ່ງປະທານາທິບໍດີ ໂມຮຳເໝັດ ມຸອິຊຊູ(MohamedMuizzou) ໄດ້ລົງນາມໃນກົດໝາຍເມື່ອວັນທີ 13 ພະຈິກຜ່ານມາ.

ການປັບປຸງດັ່ງກ່າວກຳນົດວ່າ ການຂາຍ, ການແຈກຢາຍລ້າ, ແລະ ການນຳໃຊ້ອຸປະກອນຢາສູບໄຟຟ້າ ແລະ ຢາສູບໄຟຟ້າແບບໃຊ້ແລ້ວຖິ້ມ ຈະຜິດກົດໝາຍນັບແຕ່ວັນທີ 15 ທັນວາເປັນຕົ້ນໄປ; PSM ລາຍງານວ່າການນຳເຂົ້າອຸປະກອນຢາສູບໄຟຟ້າແບບໃຊ້ແລ້ວຖິ້ມ ເຂົ້າສູ່ມານດີບຫຼັງຈາກວັນທີດັ່ງກ່າວຕ້ອງຈ່າຍຄ່າປັບໃໝ 50,000 MVR (ປະມານ 3,250 ໂດລາສະຫະລັດ).

# ສະພາຕໍ່າ Ethiopia ຜ່ານຮ່າງກົດໝາຍອະນຸຍາດ ທະນາຄານຕ່າງຊາດດໍາເນີນທຸລະກິດຢູ່ປະເທດ



(Xinhua) - ວັນອັງຄານທີ 17 ທັນວາ 2024 ສະພາຜູ້ແທນປະຊາຊົນຫຼືສະພາຕໍ່າແຫ່ງສະຫະພັນສາທາລະນະລັດປະຊາທິປະໄຕ ເອທິໂອປີ ໄດ້ຜ່ານຮ່າງກົດໝາຍອະນຸຍາດໃຫ້ທະນາຄານຕ່າງຊາດເປີດດໍາເນີນທຸລະກິດຢູ່ເອທິໂອເປຍໄດ້.

ກອງປະຊຸມສະໄໝສາມັນໄດ້ພິຈາລະນາຄືນ ແລະ ຜ່ານປະກາດກ່ຽວກັບທຸລະກິດທະນາຄານ (Banking Business Proclamation) ເຊິ່ງເປັນບາດກ້າວສໍາຄັນໃນການເປີດຂະແໜງການທະນາຄານຂອງເອທິໂອປີໃຫ້ບັນດານັກລົງທຶນຕ່າງປະເທດເຂົ້າມາລົງທຶນ, ປະກາດດັ່ງກ່າວທີ່ໄດ້ຮັບການອະນຸມັດດ້ວຍຄະແນນສຽງສ່ວນຫຼາຍ ສອດຄ່ອງກັບນະໂຍບາຍກ່ອນໜ້ານີ້ຂອງລັດຖະບານໃນການເປີດເສລີຂະແໜງການເງິນ; ຄາດວ່າຈະສາມາດດຶງດູດທະນາຄານແລະນັກລົງທຶນຕ່າງປະເທດ, ນໍາເອົາເງິນທຶນທີ່ຈໍາເປັນຢ່າງຍິ່ງມາສູ່ເສດຖະກິດຂອງປະເທດອາຟຣິກາຕາເວັນອອກແຫ່ງນີ້.

ທ່ານ ມາໂມ ມິເຣຕູ (Mamo Mihretu) ຜູ້ວ່າການທະນາຄານແຫ່ງຊາດຂອງເອທິໂອປີ (NBE) ກ່າວວ່າ ປະກາດທີ່ຫາກໍໄດ້ຮັບການອະນຸມັດນີ້ ຈະຊ່ວຍໃຫ້ເສດຖະກິດຂອງເອທິໂອປີ ຍັງມີສະຖຽນລະພາບ ໂດຍໃຫ້ຂໍ້ສັງເກດວ່າ ຮ່າງກົດໝາຍດັ່ງກ່າວໄດ້ກໍານົດຈຸດປະສົງຕົ້ນຕໍຂອງ NBE ຢ່າງຈະແຈ້ງ ເຊິ່ງລວມເຖິງການຮັກສາສະຖຽນລະພາບລາຄາແລະການສົ່ງເສີມລະບົບການເງິນທີ່ເຂັ້ມແຂງ.

ໃນອະດີດ, ຂະແໜງການທະນາຄານຂອງເອທິໂອປີໄດ້ປິດກັ້ນທະນາຄານຕ່າງປະເທດ.

ນັບແຕ່ເຂົ້າຮັບຕໍາແໜ່ງໃນປີ 2018, ນາຍົກລັດຖະມົນຕີອາບີອາເໝັດ (AbiyAhmed) ສະໜັບສະໜູນການເປີດເສລີຂະແໜງການເງິນຢ່າງຕໍ່ເນື່ອງ ເພື່ອເປັນສ່ວນໜຶ່ງຂອງການປະຕິຮູບເສດຖະກິດຢ່າງກ້ວາງຂວາງ ແນໃສ່ດຶງດູດການລົງທຶນຈາກຕ່າງປະເທດ ແລະ ຂັບເຄື່ອນການພັດທະນາເສດຖະກິດ.

# ຊາວມາລາວີ ກວ່າ 7 ລ້ານຄົນ ລົງທະບຽນເລືອກຕັ້ງທົ່ວໄປປີ 2025



(Xinhua) - ຕົວເລກສະສົມເບື້ອງຕົ້ນຂອງຊາວມາລາວີ ທີ່ລົງທະບຽນເລືອກຕັ້ງໃນ 3 ຮອບ ກ່ອນການເລືອກຕັ້ງທົ່ວໄປໃນເດືອນກັນຍາ 2025 ໄດ້ສະແດງໃຫ້ເຫັນວ່າ ມີຜູ້ລົງທະບຽນແລ້ວຫຼາຍກວ່າ 7 ລ້ານຄົນ ເຊິ່ງເພີ່ມຂຶ້ນເລັກໜ້ອຍຈາກ 6.8 ລ້ານຄົນ ທີ່ລົງທະບຽນເລືອກຕັ້ງປີ 2019, ອີງຕາມຂໍ້ມູນທີ່ເປີດເຜີຍໂດຍຄະນະກໍາມະການການເລືອກຕັ້ງມາລາວີ (Malawi Electoral Commission - MEC) ເມື່ອວັນພຸດທີ 18 ທັນວາຜ່ານມາ.

ສໍານັກງານສະຖິຕິຂອງປະເທດຄາດຄະເນວ່າ ຈະມີຜູ້ມາລົງທະບຽນທັງໝົດ 10,957,490 ຄົນ, ແຕ່ເມື່ອສິ້ນສຸດການລົງທະບຽນຮອບທີ 3 ແລະ ຮອບສຸດທ້າຍ ໃນວັນທີ 11 ທັນວາຜ່ານມາ, ມີຜູ້ລົງທະບຽນທັງໝົດ 7,162,217 ຄົນ ກວມເອົາ 65% ຂອງຕົວເລກທີ່ຄາດໄວ້.

ເຖິງຢ່າງໃດກໍຕາມ, MEC ໃຫ້ຂໍ້ສັງເກດວ່າ, ຕົວເລກສໍາລັບ 3 ໄລຍະຂອງການລົງທະບຽນຜູ້ມີສິດເລືອກຕັ້ງນັ້ນ ເປັນພຽງຕົວເລກເບື້ອງຕົ້ນ ແລະ ອາດຈະມີການປ່ຽນແປງເລັກໜ້ອຍຫຼັງຈາກ “ທໍາຄວາມສະອາດຂໍ້ມູນ”; ອີງຕາມຫົວໜ້າເຈົ້າໜ້າທີ່ຝ່າຍການເລືອກຕັ້ງຂອງ MEC ທ່ານແອນດຣູເອັມເປຊີ (AndrewMpesi) ກ່າວວ່າ ຄະນະກໍາມະການຈະເປີດເຜີຍຕົວເລກສຸດທ້າຍອີກຄັ້ງເມື່ອສາມາດລ້າງ “ຂໍ້ມູນທີ່ບໍ່ຊັດເຈນ” ເຊັ່ນການລົງທະບຽນຊໍ້າກັນ.

MEC ໄດ້ດໍາເນີນການລົງທະບຽນຜູ້ມີສິດເລືອກຕັ້ງເປັນສາມໄລຍະນັບແຕ່ເດືອນພະຈິກເປັນຕົ້ນມາ ໂດຍໄດ້ແບ່ງສະພາເມືອງຂອງປະເທດ ອອກເປັນ 14 ສະພາ ສໍາລັບຂັ້ນຕອນທີ 1 ແລະ 2, ແລະ ອີກ 8 ສະພາ ສໍາລັບຂັ້ນຕອນທີ 3.

ອີງຕາມການລາຍງານຂອງສໍານັກງານສະຖິຕິແຫ່ງຊາດຂອງມາລາວີ, ປະຊາກອນຂອງປະເທດໃນປັດຈຸບັນ ມີປະມານ 21.7 ລ້ານຄົນ ໂດຍໄວໜຸ່ມກວມເອົາຫຼາຍກວ່າ 50%.

ມາລາວີຈະຈັດການເລືອກຕັ້ງສາມສ່ວນ ໃນວັນທີ 16 ກັນຍາ 2025 ເພື່ອເລືອກຕັ້ງປະທານາທິບໍດີ, ສະມາຊິກສະພາແຫ່ງຊາດແລະ ຜູ້ຕາງໜ້າລັດຖະບານທ້ອງຖິ່ນ.

ປະເທດທາງພາກຕາເວັນອອກສຽງໃຕ້ຂອງອາຟຣິກາແຫ່ງນີ້, ມີຢ່າງໜ້ອຍ 20 ພັກການເມືອງທີ່ໄດ້ລົງທະບຽນແລ້ວ.

# ໄຟໄໝ້ຕຶກສະພາແຫ່ງຊາດ ສ.ເກົາຫຼີ ອົບພະຍົບປະຊາຊົນຫຼາຍຮ້ອຍຄົນ




(Yonhap) - ເກີດເຫດໄຟໄໝ້ທີ່ຕຶກສະພາແຫ່ງຊາດ ສ.ເກົາຫຼີ ເມື່ອຕອນທ່ຽງວັນເສົາທີ 21 ທັນວາຜ່ານມາ, ປະຊາຊົນຫຼາຍຮ້ອຍຄົນໄດ້ອົບພະຍົບອອກຈາກບ່ອນເກີດເຫດ.

ໄຟໄດ້ເກີດຂຶ້ນໃນເວລາ 11:52 ໂມງຕາມເວລາທ້ອງຖິ່ນ ທີ່ຫ້ອງໂຖງຮັບແຂກຂອງຕຶກສະພາແຫ່ງຊາດ ເຊິ່ງປະກອບດ້ວຍຫ້ອງຖະແຫຼງຂ່າວແລະຫ້ອງຈັດງານແຕ່ງດອງ ໂດຍມີປະຊາຊົນປະມານ 480 ຄົນ ລວມທັງນັກຂ່າວ ແລະ ແຂກງານແຕ່ງດອງ ໄດ້ຮັບການອົບພະຍົບອອກຈາກຕຶກ, ມີ 6 ຄົນໃນຈໍານວນນີ້ ໄດ້ຮັບການປິ່ນປົວທາງການແພດຈາກການສູດດົມຄວັນພິດ.

ລົດດັບເພີງ 16 ຄັນແລະເຈົ້າໜ້າທີ່ດັບເພີງ 55 ຄົນ ຖືກສົ່ງໄປຈຸດເກີດເຫດ ກ່ອນທີ່ຈະຄວບຄຸມໄຟໄດ້ໝົດໃນເວລາປະມານ 13:00 ໂມງ; ເຈົ້າໜ້າທີ່ດັບເພີງກໍາລັງສືບສວນສາເຫດທີ່ແທ້ຈິງຂອງອຸບັດເຫດດັ່ງກ່າວ.

# ສີລັງກາ ຈະອອກກົດໝາຍ ເພື່ອຄວບຄຸມການຫາປາຜິດກົດໝາຍ



(Xinhua) - ຄະນະລັດຖະບານສີລັງກາໄດ້ຮັບຮອງເອົາຂໍ້ສະເໜີທີ່ຈະອອກກົດໝາຍສະບັບໃໝ່ເພື່ອຄວບຄຸມການຫາປາທີ່ຜິດກົດໝາຍ, ບໍ່ມີການລາຍງານ ແລະ ບໍ່ມີລະບຽບການ ໃນເຂດນ່ານນໍ້າຂອງປະເທດ, ອີງຕາມການລາຍງານຂອງກົມຂໍ້ມູນຂ່າວສານຂອງລັດຖະບານ ເມື່ອວັນອັງຄານທີ 24 ທັນວາຜ່ານມາ.

ຄະນະກໍາມະການທີ່ປະກອບດ້ວຍເຈົ້າໜ້າທີ່ກະຊວງການປະມົງແລະຊັບພະຍາກອນນໍ້າ, ອົງການໄອຍະການສູງສຸດ, ອົງການກວດສອບແຫ່ງລັດແລະກະຊວງການຕ່າງປະເທດ ໂດຍການຊ່ວຍເຫຼືອດ້ານວິຊາການຈາກອົງການອາຫານແລະການກະເສດຂອງສະຫະປະຊາຊາດ (FAO) ໄດ້ກະກຽມຮ່າງກົດໝາຍດັ່ງກ່າວໃນເບື້ອງຕົ້ນ ເພື່ອເສີມສ້າງຂອບລັດຖະທໍາມະນູນກ່ຽວກັບບັນຫາທີ່ກ່ຽວຂ້ອງເຖິງການຫາປາທີ່ຜິດກົດໝາຍ, ບໍ່ມີການລາຍງານແລະບໍ່ມີລະບຽບການ ໃນເຂດນ່ານນໍ້າຂອງສີລັງກາ.

# ຫວຽດນາມ ວາງແຜນການປະຕິຮູບຢ່າງກ້າຫານ ເພື່ອປັບປຸງບັນດາກະຊວງໃຫ້ມີປະສິດທິພາບສູງຂຶ້ນ

# ແປ ແລະ ຮຽບຮຽງໂດຍ: ວິລະພັດ ພາບວີໄຊ

*ຫວຽດນາມ ພວມວາງແຜນການປະຕິຮູບລະບົບລັດຖະການຄັ້ງໃຫຍ່ ໂດຍຈະຍຸບບັນດາກະຊວງ, ອົງການ, ແລະ ສະຖານີໂທລະພາບ ແລະ ວິທະຍຸກະຈາຍສຽງ ເພື່ອຫຼຸດຜ່ອນຂັ້ນຕອນການເຮັດວຽກທີ່ບໍ່ຈຳເປັນ ຫຼື ການມີລະບຽບທາງການຫຼາຍໂພດ (red tape) ແລະ ກະຕຸ້ນການເຕີບໂຕ; ການປ່ຽນແປງຄັ້ງກ່າວ ມີຄວາມສ່ຽງທີ່ຈະເກີດຄວາມຫຍຸ້ງຍາກໃນໄລຍະສັ້ນ, ແຕ່ຈະໃຫ້ຜົນປະໂຫຍດໃນໄລຍະຍາວ.*




ເວັບໄຊ DW (Deutsche Welle - ຕື່ນເຢຍລະມັນ) ລາຍງານວ່າ: ລັດຖະບານຫວຽດນາມມີແຜນຈະປັບປຸງລະບົບລັດຖະການຂອງຕົນຢ່າງໃຫຍ່ຫຼວງໃນໄລຍະອີກບໍ່ເທົ່າໃດເດືອນຂ້າງໜ້າ ເຊິ່ງຈະຫຼຸດຈຳນວນອົງການຂອງລັດຖະບານ ຈາກ 30 ເປັນ 21 ເຊິ່ງຖືກອະທິບາຍວ່າເປັນ "ການປະຕິວັດ" ທາງສະຖາບັນ.

ການປະຕິຮູບທີ່ໄດ້ສະເໜີ ຈະລວມຫຼາຍກະຊວງທີ່ສຳຄັນເຂົ້າກັນ ລວມທັງກະຊວງການເງິນ ແລະ ກະຊວງການລົງທຶນ; ພ້ອມກັນນັ້ນ, ກໍຈະຍຸບບັນດາຄະນະກຳມະການຂອງພັກກອມມູນິດຫວຽດນາມ ແລະ ບັນດາອົງການສື່ມວນຊົນຂອງລັດ.

ວັນທີ 25 ພະຈິກ 2024 ຄະນະບໍລິຫານງານສູນກາງພັກໄດ້ອະນຸມັດແຜນການດັ່ງກ່າວ; ຄາດວ່າການປະຕິຮູບ ຈະໃຫ້ສຳເລັດພາຍໃນເດືອນເມສາປີນີ້ ເຊິ່ງຈະເຮັດໃຫ້ຫວຽດນາມ ມີ 13 ກະຊວງ, 4 ອົງການທຽບເທົ່າ ແລະ ເພີ່ມຕື່ມ 4 ອົງການຂອງລັດຖະບານ.

**ມີການວາງແຜນການປ່ຽນແປງຫຍັງແດ່?**

ການປ່ຽນແປງທີ່ສຳຄັນທີ່ສຸດອັນໜຶ່ງ ແມ່ນການລວມກະຊວງການເງິນ ກັບ ກະຊວງແຜນການ ແລະ ການລົງທຶນ ເພື່ອຈັດຕັ້ງເປັນ "ກະຊວງຂະໜາດໃຫຍ່" ໃໝ່ ທີ່ເອີ້ນວ່າກະຊວງການເງິນ ແລະ ແຜນການແຫ່ງຊາດ; ນອກນີ້, ສື່ມວນຊົນຂອງລັດຫວຽດນາມ ໄດ້ລາຍງານວ່າ, ກະຊວງຄົມມະນາຄົມຂົນສົ່ງ ຈະລວມເຂົ້າກັບກະຊວງກໍ່ສ້າງ ແລະ ກະຊວງແຮງງານ, ຜູ້ເສຍອົງຄະ ແລະ ສະຫວັດດີການສັງຄົມ ຈະລວມເຂົ້າກັບກະຊວງພາຍໃນ.

ພັກກອມມູນິດຫວຽດນາມ ແລະ ສະພາແຫ່ງຊາດ ກໍຈະໄດ້ຮັບການປັບປຸງໂຄງປະກອບຄືນໃໝ່ເຊັ່ນກັນ, ຕົວຢ່າງຄື: ຄະນະພົວພັນຕ່າງປະເທດສູນກາງພັກແລະກຳມາທິການການຕ່າງປະເທດ ຈະຖືກລວມເຂົ້າກັບກະຊວງການຕ່າງປະເທດ.

ໃນລຳດັບຖັດລົງມາ, ສື່ມວນຊົນຂອງລັດຫຼາຍແຫ່ງເຊິ່ງສ່ວນໃຫຍ່ແມ່ນສະຖານີວິທະຍຸ ຈະຖືກຍຸບເລີກ ແລະ ປ່ຽນພະນັກງານໄປຍັງອົງການຂ່າວທີ່ໃຫຍ່ກວ່າ.

ເຖິງແມ່ນວ່າຕົວເລກທີ່ແນ່ນອນຍັງບໍ່ທັນໄດ້ເປີດເຜີຍ, ແຕ່ຂະໜາດຂອງການຕັດຫຼຸດຄັ້ງກ່າວຊີ້ໃຫ້ເຫັນວ່າ ພະນັກງານລັດຫຼາຍພັນຄົນອາດຈະໄດ້ຮັບຜົນກະທົບ.

ການຄວບລວມຄັ້ງກ່າວ ບໍ່ແມ່ນເລື່ອງໃໝ່ໃນປະເທດຫວຽດນາມ, ເຊິ່ງໄດ້ຫຼຸດຈຳນວນກະຊວງຕ່າງໆລົງຢ່າງຕໍ່ເນື່ອງຈາກ 36 ກະຊວງ ໃນຕົ້ນຊຸມປີ 1990 ເຫຼືອພຽງ 22 ກະຊວງ ໃນປີ 2021.

ເຖິງຢ່າງໃດກໍຕາມ, ນັກວິເຄາະໃຫ້ຂໍ້ສັງເກດວ່າຂະໜາດ ແລະ ຄວາມໄວຂອງການປະຕິຮູບແມ່ນກວ້າງຂວາງຫຼາຍ ໂດຍເລຂາທິການໃຫຍ່ພັກກອມມູນິດຫວຽດນາມໂຕເລິມ (Tô Lâm) ເອີ້ນຂະບວນການນີ້ວ່າ "ການປະຕິວັດ" ທາງສະຖາບັນ.

ທ່ານ ຫງວຽນ ຄັກ ຢາງ (Nguyễn Khắc Giang) ນັກຄົ້ນຄວ້າຮັບເຊີນ ທີ່ສະຖາບັນ ISEAS Yusof Ishak ໃຫ້ຮູ້ວ່າ: ເປົ້າໝາຍຕົ້ນຕໍແມ່ນ "ຫັນເປັນທັນສະໄໝກົນໄກຂອງລັດຫວຽດນາມ, ແກ້ໄຂຄວາມບໍ່ມີປະສິດທິຜົນທີ່ກີດຂວາງການປົກຄອງ ແລະ ການເຕີບໂຕທາງເສດຖະກິດ, ແລະ ປັບປຸງລະບົບລັດຖະການທີ່ຟົດຟື້ນ".

**ສິ່ງທ້າທາຍດ້ານເສດຖະກິດ**

ທີ່ກອງປະຊຸມຄະນະກຳມະການສູນກາງພັກເມື່ອເດືອນພະຈິກຜ່ານມາ, ທ່ານ ໂຕເລິມ ຮຽກການປ່ຽນແປງນີ້ ແມ່ນຄວາມຈຳເປັນດ້ານເສດຖະກິດໂດຍອະທິບາຍວ່າສະຖາບັນຕ່າງໆເປັນ "ຄໍຂວດຂອງຄໍຂວດ" (the bottleneck of bottlenecks) ແລະກ່າວເສີມວ່າການປະຕິຮູບມີຈຸດປະສົງເພື່ອເຮັດໃຫ້ລັດຖະບານ "ຄ່ອງຕົວ, ກະທັດຮັດ, ເຂັ້ມແຂງ, ມີປະສິດທິພາບ, ມີປະສິດທິຜົນ ແລະ ສ້າງຜົນກະທົບ".

ສື່ມວນຊົນຂອງລັດຫວຽດນາມ ໄດ້ອ້າງຄຳເວົ້າຂອງທ່ານ ຫງວຽນ ດິ່ງ ກຸງ (Nguyễn Đình Cung) ອະດີດຜູ້ອຳນວຍການສະຖາບັນຄຸ້ມຄອງເສດຖະກິດສູນກາງ ເຊິ່ງແມ່ນໜຶ່ງໃນບັນດາສະຖາບັນລະດັບຊາດຕົ້ນຕໍຂອງປະເທດ ເມື່ອເດືອນທັນວາ 2024 ວ່າ ການປະຕິຮູບຄວນຈະຊ່ວຍປັບປຸງປະສິດທິພາບທາງເສດຖະກິດຢ່າງຫຼວງຫຼາຍ. "ໂຄງການລົງທຶນອາດຈະໃຊ້ເວລາຫຼາຍປີເພື່ອໃຫ້ສຳເລັດຂັ້ນຕອນຕ່າງໆ; ເມື່ອຂັ້ນຕອນສຳເລັດ, ໂອກາດທາງທຸລະກິດອາດຈະຜ່ານໄປແລ້ວແລະແຜນການໃນເບື້ອງຕົ້ນອາດຕ້ອງມີການປັບປຸງ" ທ່ານກ່າວ.

ທ່ານ ຫງວຽນ ດິ່ງ ກຸງ ໃຫ້ຂໍ້ສັງເກດວ່າ ການປັບປຸງບັນດາກະຊວງ ແລະ ຄະນະກຳມະການຕ່າງໆໃຫ້ຄ່ອງຕົວນັ້ນ, ຄວນຫຼຸດຜ່ອນຄວາມຫຍຸ້ງຍາກວຽກງານເອກະສານກ່ຽວກັບການລົງທຶນ ເຊັ່ນດຽວກັນກັບໂຄງການພື້ນຖານໂຄງລ່າງແລະອະສັງຫາລິມະຊັບ; ນອກຈາກນີ້, ຍັງຈະແກ້ໄຂບັນຫາການທັບຊ້ອນຂອງບາງສະຖາບັນທີ່ດຶງລັດຖະບານໄປໃນທິດທາງທີ່ກົງກັນຂ້າມ: "ຄົນໜຶ່ງຕ້ອງການໃຫ້ເຈົ້າໄປເບື້ອງຂວາ, ໃນຂະນະທີ່ອີກຄົນໜຶ່ງຕ້ອງການໃຫ້ເຈົ້າໄປເບື້ອງຊ້າຍບັນຫານີ້ເກີດຂຶ້ນເລື້ອຍໆ".

ການປະຕິຮູບດັ່ງກ່າວມີຂຶ້ນທ່າມກາງຄວາມວິຕົກກັງວົນກ່ຽວກັບຈັງຫວະການປ່ຽນແປງທາງເສດຖະກິດ ເນື່ອງຈາກເປັນເສດຖະກິດທີ່ອີງໃສ່ການສົ່ງອອກ, ຫວຽດນາມ ຈຶ່ງປະເຊີນກັບຄວາມບໍ່ແນ່ນອນກ່ຽວກັບການພົວພັນດ້ານການຄ້າກັບຕະຫຼາດທີ່ໃຫຍ່ທີ່ສຸດຄືສະຫະລັດອາເມລິກາ ເຊິ່ງໄດ້ທະວີຄວາມຮຸນແຮງຫຼາຍຂຶ້ນກ່ອນທີ່ ໂດນັນ ທຣຳ (Donald Trump) ຈະເຂົ້າຮັບຕຳແໜ່ງປະທານາທິບໍດີ.

ທ່ານ ທຣຳ ໄດ້ຂົ່ມຂູ່ທີ່ຈະເກັບພາສີການນຳເຂົ້າສິນຄ້າທັງໝົດ 10-20% ແລະ ກ່ອນໜ້ານີ້ໄດ້ເອີ້ນຫວຽດນາມວ່າ "ປະເທດທີ່ລະເມີດການຄ້າຂອງສະຫະລັດຢ່າງຮ້າຍແຮງທີ່ສຸດ" ເນື່ອງຈາກການເກີນດຸນຈຳນວນຫຼາຍ ເຊິ່ງເພີ່ມຂຶ້ນຢ່າງຫຼວງຫຼາຍນັບຕັ້ງແຕ່ປີ 2019.

ທ່ານ ຫງວຽນ ຮົ່ງ ຫ້າຍ (Nguyễn Hồng Hải) ອາຈານອາວຸໂສຂອງມະຫາວິທະຍາໄລ VinUniversity ກ່າວວ່າ: 40 ປີຫຼັງຈາກນຳໃຊ້ການຕະຫຼາດເສລີມາໃຊ້, ຫວຽດນາມໄດ້ກາຍເປັນປະເທດທີ່ມີລາຍຮັບປານກາງຕ່ຳ ແລະ ຖືເປັນຮູບແບບການພັດທະນາໃນລະດັບສາກົນ. ເຖິງຢ່າງໃດກໍຕາມ "ໂຄງປະກອບສະຖາບັນຂອງຫວຽດນາມ ຖືກເບິ່ງວ່າເປັນ 'ຄໍຂວດ' ທີ່ກີດຂວາງການພັດທະນາເສດຖະກິດໃນອະນາຄົດ; ໂດຍທຸກສິ່ງບໍ່ຊື່ວ່າ, ຫວຽດນາມ ຄວນພັດທະນາໄດ້ໄວກວ່ານີ້ແລະຢູ່ໃນລະດັບການພັດທະນາທີ່ສູງຂຶ້ນ".

**ການລວມອຳນາດ**

ການປະຕິຮູບຍັງມີມິຕິທາງການເມືອງອີກດ້ວຍ. ທ່ານ ໂຕ ເລິມ ໄດ້ກາຍເປັນຜູ້ນຳພັກໃນເດືອນສິງຫາ 2024 ພາຍຫຼັງການເສຍຊີວິດຂອງອະດີດເລຂາທິການໃຫຍ່ ຫງວຽນ ຝູ ຈ້ອງ (Nguyễn Phú Trọng) ຜູ້ເຊິ່ງປ່ຽນແປງປະເທດຫວຽດນາມດ້ວຍຂະບວນການປຸກລະດົມຕໍ່ຕ້ານການສໍ້ລາດບັງຫຼວງທີ່ເດັດຂາດແບບ "ເຕົາຜີທີ່ລຸກໄໝ້".

ກ່ອນໜ້ານີ້, ທ່ານ ໂຕ ເລິມ ດຳລົງຕຳແໜ່ງລັດຖະມົນຕີກະຊວງຕຳຫຼວດ ໂດຍໄດ້ຮວບຮວມອຳນາດຢ່າງຫຼວງຫຼາຍດ້ວຍການເປັນຜູ້ນຳໜ້າໃນການຕໍ່ສູ້ຕ້ານການສໍ້ລາດບັງຫຼວງນັບແຕ່ປີ 2021 ເປັນຕົ້ນມາ; ບັນດາເຈົ້າໜ້າທີ່ຈາກກະຊວງຕຳຫຼວດ, ກອງທັບ ແລະ ຕຳຫຼວດ ໄດ້ດຳລົງຕຳແໜ່ງເປັນກົມການເມືອງເພີ່ມຂຶ້ນເລື້ອຍໆ, ເຊິ່ງເປັນອົງການທີ່ມີອຳນາດໃນການຕັດສິນໃຈສູງສຸດ.

ຫຼັງຈາກຂຶ້ນສູ່ລະດັບສູງສຸດຂອງພັກ, ທ່ານ ໂຕເລິມ ສືບຕໍ່ລວມອຳນາດ ຈົນຖືກກ່າວຫາວ່າມີທ່າອຽງຂອງລະບອບຜະເດັດການ; ກາງປີ 2024 ທ່ານໄດ້ດຳລົງຕຳແໜ່ງເປັນທັງຜູ້ນຳພັກ ແລະ ປະທານປະເທດໃນໄລຍະສັ້ນເຊິ່ງຖືວ່າເປັນການລວມອຳນາດທີ່ບໍ່ເຄີຍມີມາກ່ອນໃນຫວຽດນາມ.

ໄລຍະເວລາຂອງການປະຕິຮູບແມ່ນມີຄວາມສຳຄັນ ເນື່ອງຈາກເກີດຂຶ້ນພຽງໜຶ່ງປີກ່ອນກອງປະຊຸມໃຫຍ່ພັກກອມມູນິດຫວຽດນາມໃນປີ 2026 ເຊິ່ງຄວາມເປັນຜູ້ນຳຂອງໂຕເລິມຈະຕ້ອງໄດ້ຮັບການຢືນຢັນ; ຂະນະທີ່ນັກວິເຄາະສ່ວນຫຼາຍຄາດວ່າທ່ານຈະໄດ້ຮັບຕຳແໜ່ງເປັນເລຂາທິການໃຫຍ່ພັກອີກສະໄໝໜຶ່ງ, ແຕ່ກໍມີສຽງຊຸບຊິບສະແດງຄວາມບໍ່ພໍໃຈພາຍໃນພັກ.

## ລັດຖະສະພາຣູມານີ ເລືອກຜູ້ນຳຄົນໃໝ່


ອີລີ ໂບໂລຈານ


ຊິບຣຽນ ເຊີບັນ

(Xinhua) - ທັງສອງສະພາຂອງລັດຖະສະພາຣູມານີ ໄດ້ເລືອກຕັ້ງຜູ້ນຳຄົນໃໝ່ເມື່ອວັນຈັນທີ 23 ທັນວາຜ່ານມາ.

ທ່ານ ຊິບຣຽນ ເຊີບັນ (Ciprian Serban) ຕົວແທນຈາກພັກສັງຄົມປະຊາທິປະໄຕ (PSD) ໄດ້ຮັບເລືອກຕັ້ງເປັນປະທານສະພາຜູ້ແທນປະຊາຊົນ ຫຼື ສະພາຕ່ຳ ດ້ວຍຄະແນນສຽງເຫັນດີ 195 ແລະ ຄັດຄ້ານ 86 ສຽງ ຈາກການລົງຄະແນນ 285 ສຽງ (ສະພາຕ່ຳ ມີ 330 ທີ່ນັ່ງ).

ທ່ານ ອີລີ ໂບໂລຈານ (Ilie Bolojan) ຮັກສາການຫົວໜ້າພັກເສລີນິຍົມແຫ່ງຊາດ (PNL) ໄດ້ຮັບເລືອກຕັ້ງເປັນປະທານສະພາສູງດ້ວຍຄະແນນສຽງເຫັນດີ 70 ສຽງ, ເອົາຊະນະທ່ານ ມີຣເຊຍ ເຊລາຣູ (Mircia Chelaru) ຈາກພັນທະມິດເພື່ອສະຫະພາບຊາວຣູມານີ (AUR) ແລະ ທ່ານນາງ ນາເດຍ-ຄອສມີນາ ເຊີວາ (Nadia-Cosmina Cerva) ຈາກພັກ S.O.S. Romania ທີ່ໄດ້ຮັບຄະແນນ 29 ສຽງ ແລະ 14 ສຽງ ຕາມລຳດັບ ຈາກການລົງຄະແນນ 114 ສຽງ (ສະພາສູງ ມີ 136 ທີ່ນັ່ງ).





















## ປະທານ...

(ຕໍ່ຈາກໜ້າ 8)

ການພັກ, ສະພາແຫ່ງຊາດ ກໍຄືລັດຖະບານ ໃຫ້ພະນັກງານ, ທະຫານ-ຕຳຫຼວດກໍຄືປະຊາຊົນບັນດາເຜົ່າ ໄດ້ຮັບຮູ້ເຂົ້າໃຈ, ເຊື່ອມຊຶມ ແລະ ເຂົ້າຮ່ວມຈັດຕັ້ງປະຕິບັດວຽກງານຕ່າງໆໃຫ້ໄດ້ຮັບຜົນສຳເລັດ, ນຳເອົາໝາກຜົນແຫ່ງການສ້າງສາພັດທະນາເສດຖະກິດ-ສັງຄົມ ມາສູ່ປະເທດຊາດ, ປັບປຸງຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າໃຫ້ນັບມື້ດີຂຶ້ນ. ໝາຍຄວາມວ່າ: ສື່ມວນຊົນປະເພດຕ່າງໆມີບົດບາດສຳຄັນຫຼາຍໃນການນຳເອົາແນວທາງນະໂຍບາຍຂອງພັກ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມໄປເຜີຍແຜ່ໃຫ້ພໍ່ແມ່ປະຊາຊົນຢູ່ບັນດາແຂວງ, ເມືອງ, ບ້ານລວມທັງເຂດຫ່າງໄກສອກຫຼີກໂດຍຜ່ານສື່ປະເພດຕ່າງໆ ເປັນຕົ້ນ ໂທລະພາບ, ວິທະຍຸກະຈາຍສຽງ, ໜັງສືພິມ, ສື່ສັງຄົມອອນລາຍ; ອີກດ້ານໜຶ່ງ, ນັກຂ່າວສື່ມວນຊົນ ກໍເປັນຜູ້ທີ່ມີພອນສະຫວັນໃນການເວົ້າຈາປາໄສ, ມີຄວາມຊຳນານໃນການຜັນຂະຫຍາຍເນື້ອໃນເອກະສານສຳຄັນຕ່າງໆໃຫ້ຜູ້ອ່ານ, ຜູ້ຟັງມີຄວາມສົນໃຈຕິດຕາມຢ່າງຕັ້ງໜ້າ. ສະນັ້ນ, ຈຶ່ງສະເໜີໃຫ້ເຫັນໄດ້ຄວາມສຳຄັນໃນວຽກງານສື່ມວນຊົນ ແລະ ບຸກບືນສູ້ຊົນໃນໜ້າທີ່ວຽກງານຂອງຕົນ.

3. ການໂຄສະນາເຜີຍແຜ່ການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ມີຄວາມສຳຄັນຫຼາຍ ໂດຍສະເພາະການດຳເນີນກອງປະຊຸມສະໄໝສາມັນ, ການເຄື່ອນໄຫວຕິດຕາມກວດກາການປະຕິບັດກົດໝາຍ ແລະ ອື່ນໆ. ເນື່ອງຈາກວ່າສະພາແຫ່ງຊາດເປັນອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ ເປັນອົງການສູງສຸດແຫ່ງອຳນາດລັດ, ສະພາປະຊາຊົນຂັ້ນແຂວງ ກໍເປັນອົງການຕົວແທນຂອງປະຊາຊົນບັນດາເຜົ່າຢູ່ທ້ອງຖິ່ນ ຈຶ່ງມີໜ້າທີ່ຕ້ອງໄດ້ລາຍງານການເຄື່ອນໄຫວວຽກງານຂອງຕົນ ໃຫ້ຜູ້ມີສິດເລືອກຕັ້ງ ກໍຄືປະຊາຊົນບັນດາເຜົ່າ ໄດ້ຮັບຮູ້, ເຂົ້າໃຈ ແລະ ເຂົ້າຮ່ວມການຈັດຕັ້ງປະຕິບັດມະຕິຂອງສະພາແຫ່ງຊາດ, ມະຕິຂອງສະພາປະຊາຊົນຂັ້ນແຂວງ ໃຫ້ເກີດໝາກຜົນຕໍ່ປະເທດຊາດ; ສະນັ້ນ, ຈຶ່ງສະເໜີມາຍັງສື່ມວນຊົນ ຈົ່ງໄດ້ເອົາໃຈໃສ່ເກັບກຳ, ຄົ້ນຄວ້າ, ວິເຄາະວິໄຈວຽກງານຕ່າງໆ ໃຫ້ເລິກເຊິ່ງ, ໂຄສະນາເຜີຍແຜ່ຜ່ານສື່ມວນຊົນປະເພດຕ່າງໆ ຢ່າງກວ້າງຂວາງ, ທົ່ວເຖິງເປົ້າໝາຍຕ່າງໆ.

ການໂຄສະນາເຜີຍແຜ່ການດຳເນີນກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດແຕ່ລະຄັ້ງ ສະເໜີໃຫ້ສື່ມວນຊົນເອົາໃຈໃສ່ການສຳພາດສະມາຊິກສະພາແຫ່ງຊາດ ຕໍ່ຫົວຂໍ້ຕ່າງໆທີ່ຕິດພັນກັບບັນຫາພົ້ນເດັ່ນຂອງສັງຄົມ, ບັນຫາທີ່ສັງຄົມມີຄວາມສົນໃຈຫຼາຍ ເພື່ອໃຫ້ຜູ້ແທນອະທິບາຍທີ່ມີເຫດມີຜົນ ໃຫ້ຜູ້ມີສິດເລືອກຕັ້ງໄດ້ເຂົ້າໃຈຕໍ່ບັນຫາຕ່າງໆ; ການຖ່າຍທອດການປະກອບຄຳເຫັນຂອງສະມາຊິກສະພາແຫ່ງຊາດຢູ່ກອງປະຊຸມ ກໍເປັນວຽກງານທີ່ສຳຄັນ ເພື່ອເຮັດໃຫ້ຜູ້ມີສິດເລືອກຕັ້ງ ໄດ້ຮັບຮູ້ການປະຕິບັດໜ້າທີ່ຕົວແທນຂອງຕົນຢູ່ກອງປະຊຸມສະພາແຫ່ງຊາດ.

4. ການເຄື່ອນໄຫວວຽກງານຈຸດສຸມຂອງສະພາແຫ່ງຊາດໃນປັດຈຸບັນ ແມ່ນການປັບປຸງລັດຖະທຳມະນູນສະບັບປີ2015 ເຊິ່ງເປັນການຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ເຂົ້າໃນເນື້ອໃນຂອງລັດຖະທຳມະນູນ ໂດຍສະເພາະການບູລະນະອົງການປົກຄອງທ້ອງຖິ່ນໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ. ວຽກງານດັ່ງກ່າວມີຄວາມສຳຄັນຫຼາຍ, ເນື່ອງຈາກລັດຖະທຳມະນູນເປັນກົດໝາຍພື້ນຖານຂອງຊາດ, ທຸກກົດໝາຍຕ້ອງສອດຄ່ອງກັບລັດຖະທຳມູນ; ນອກຈາກນັ້ນ, ລັດຖະທຳມະນູນຍັງໄດ້ກຳນົດລະບົບອົງການຈັດຕັ້ງລັດ, ພາລະບົດບາດ, ສິດ ແລະ ໜ້າທີ່ຂອງອົງການຈັດຕັ້ງດັ່ງກ່າວ, ກຳນົດສິດ ແລະ ພັນທະຂອງພົນລະເມືອງ ແລະ ອື່ນໆ. ເພື່ອເຮັດໃຫ້ການປັບປຸງລັດຖະທຳມະນູນມີຄວາມສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ສະພາບການຕົວຈິງຂອງປະເທດ ແລະ ສາມາດຈັດຕັ້ງປະຕິບັດໄດ້ຍາວນານ;ສະນັ້ນ,ການໂຄສະນາເຜີຍແຜ່ການປັບປຸງທັງເປັນການລະດົມຄວາມຄິດເຫັນຢ່າງກວ້າງ ຂວາງຈາກປະຊາຊົນບັນດາເຜົ່າ, ຊັ້ນຄົນຕ່າງໆໂດຍຜ່ານສື່ມວນຊົນແມ່ນມີຄວາມສຳຄັນຫຼາຍ ຈຶ່ງຂໍໃຫ້ບັນດາສື່ມວນຊົນເປັນເຈົ້າການໃນວຽກງານດັ່ງກ່າວຕື່ມ.

5. ການເຄື່ອນໄຫວປະຕິບັດໜ້າທີ່ວຽກງານຂອງສະພາແຫ່ງຊາດຊຸດທີ IX ກໍຄືສະພາປະຊາຊົນຂັ້ນແຂວງ ຊຸດທີ II ມາຮອດປັດຈຸບັນ ໄດ້ກ້າວເຂົ້າສູ່ໄລຍະທ້າຍອາຍຸການແລ້ວ, ໃນປີ 2025 ນີ້ ເປັນປີທີ່ຈະມີການກະກຽມໃຫ້ແກ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດທີ



X ກໍຄືສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ III ເຊິ່ງເປັນປາງບຸນໃຫຍ່ຂອງທົ່ວປວງຊົນລາວທັງຊາດ. ເພື່ອເຮັດໃຫ້ການເລືອກຕັ້ງບັນລຸຕາມລະດັບຄາດໝາຍ ເປັນຕົ້ນ ເພດ, ເຜົ່າ, ໄວ; ສະນັ້ນ, ການໂຄສະນາເຜີຍແຜ່ວຽກງານເລືອກຕັ້ງຂອງສື່ມວນຊົນປະເພດຕ່າງໆ ມີຄວາມສຳຄັນຫຼາຍ ຈຶ່ງສະເໜີໃຫ້ສື່ມວນຊົນຈົ່ງໄດ້ກະກຽມດ້ານເຄື່ອງມື, ຮູບແບບ, ວິທີການໂຄສະນາໃຫ້ສອດຄ່ອງກັບທຸກເປົ້າໝາຍທັງສາມາດດຶງດູດຄວາມສົນໃຈຂອງປະຊາຊົນໃນການຕິດຕາມການໂຄສະນາ.

6. ວຽກງານສື່ມວນຊົນໃນປັດຈຸບັນ ໄດ້ມີການພັດທະນາ, ກ້າວໜ້າ, ຂະຫຍາຍຕົວຢ່າງວ່ອງໄວ ໂດຍສະເພາະສື່ສັງຄົມອອນລາຍ ເຮັດໃຫ້ອິດທິກຳລັງປໍລະປັກ ນຳໃຊ້ສື່ສັງຄົມອອນລາຍໃນທາງທີ່ບໍ່ຖືກຕ້ອງ, ໃສ່ຮ້າຍປ້າຍສີໃນທາງທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ເຮັດໃຫ້ປະຊາຊົນຈຳນວນໜຶ່ງທີ່ມີທັດສະນະຫຼັກໝັ້ນການເມືອງບໍ່ທັນໜັກແໜ້ນຫຼົງເຊື່ອ, ສ້າງຄວາມແຕກແຍກພາຍໃນ ເຊິ່ງເປັນໄພອັນຕະລາຍໄລຍະຍາວ; ຕໍ່ໜ້າສະພາບການດັ່ງກ່າວ ເປັນໜ້າທີ່ອັນໜັກໜ່ວງຂອງບັນດາສື່ຕ່າງໆທີ່ເຮັດໜ້າທີ່ວຽກງານສື່ມວນຊົນ ຈະຕ້ອງໄດ້ຄົ້ນຄວ້າວິທີການແກ້ໄຂຢ່າງມີເຫດມີຜົນ, ສອດຄ່ອງກັບແຕ່ລະບັນຫາ ຈຶ່ງສະເໜີໃຫ້ເອົາໃຈໃສ່ວຽກງານດັ່ງກ່າວ.

ພາຍຫຼັງສຳເລັດພິທີດັ່ງກ່າວ ບັນດາສື່ມວນຊົນຍັງໄດ້ເຂົ້າຢ້ຽມຊົມຫ້ອງມູນເຊື້ອຂອງສະພາແຫ່ງຊາດອີກດ້ວຍ ເຊິ່ງໄດ້ເປີດຢ່າງເປັນທາງການແຕ່ວັນທີ 30 ກັນຍາ 2024 ເປັນຕົ້ນມາ.

**(ກົງທະນູຄຳ ພິພັດເສລີ)**

**ຜູ້ຊີ້ນຳ**
ທ່ານ ສີງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ